Vol: 1, Issue: 1, July-December 2026

Good Governance in Temple Administration Affecting the Work Effectiveness of Temple Committees in Kaysone Phomvihane City, Savannakhet Province

Katork DAENGKHAMPARN[1*] Kaysone XAYYALATH[2] and Oun KONGTHON [3]

[1] Faculty of Business Administration, Savannakhet University

[2] Faculty of Business Administration, Savannakhet University

[3] Faculty of Business Administration, Savannakhet University

Received: 27.07.26
Revised: 11.08.26
Accepted: 24.08.26

Abstract

This study has two main objectives: 1) to compare the level of opinions, classified by personal factors, regarding the work effectiveness of temple administrative committees; and 2) to analyze the six dimensions of good governance principles that influence the work effectiveness of temple administrative committees in Kaysone Phomvihane City.

This study is quantitative research, using Kaysone Phomvihane City as the study area. The sample used to answer the questionnaire consisted of monks and novices from temples with a population of 10 or more members, totaling 25 temples with 230 monks/novices in total, determined using the Taro Yamane formula. Both descriptive statistics (percentage, mean, standard deviation) and inferential statistics were used, including t-test, One-way ANOVA/ F-test with pairwise comparison using the Scheffé Test, and Multiple Regression Analysis. The study found that personal factors of status, age, and years in monkhood (phansa) did not result in statistically significant differences in opinion levels regarding work effectiveness. Meanwhile, level of secular education, Pali/Dhamma studies level (Parian Tham), and Dhamma scholar level (Nak Tham) showed statistically significant differences at the 0.05 level in some aspects. Good governance principles overall were able to predict and had a statistically significant positive effect on the work effectiveness of temple administrative committees at the 0.05 level. However, when considered by individual dimension, only 4 dimensions were found to have a statistically significant influence, ranked from highest to lowest as follows: the principle of accountability, the principle of transparency, the principle of participation, and the principle of cost-effectiveness/efficiency. The principle of rule of law and the principle of ethics/morality showed no statistically significant influence.

Keywords: administrative effectiveness, Good Governance, temple administrative committee, Kaysone Phomvihane City

*** Corresponding Author:** Katork DAENGKHAMPARN

e-mail: bnt93044@gmail.com

Vol: 1, Issue: 1, July-December 2026

ການບໍລິຫານວັດຕາມຫຼັກທຳມາພິບານທີ່ສົ່ງຜົນຕໍ່ປະສິດທິຜົນການເຮັດວຽກຂອງ ຄະນະບໍລິຫານວັດ ພາຍໃນ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ

ກະໂຕກ ແດງຄຳປານ[1*], ໄກສອນ ໄຊຍະລາດ[2] ແລະ ອຸ່ນ ກອງທິນ[3]

[1] ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ

[2] ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ

[3] ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ

ການສົ່ງບົດຄວາມ: 27.07.26
ປັບປຸງສຳເສັດ: 11.08.26
ການຕອບຮັບ: 24.08.26

ບົດຄັດຫຍໍ້

ການສຶກສາຄັ້ງນີ້ມີຈຸດປະສົງຫຼັກ ມີຈຸດປະສົງ 2 ຂໍ້ຄື: 1) ເພື່ອປຽບທຽບລະດັບຄວາມຄິດເຫັນຈຳແນກຕາມປັດໄຈສ່ວນບຸກຄົນ ຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ແລະ 2) ເພື່ອວິເຄາະຫຼັກທຳມາພິບານທີ່ສົ່ງຜົນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ໃນນະຄອນໄກສອນພົມວິຫານ.

ການສຶກສາຄັ້ງນີ້ເປັນການວິໄຈເຊີງປະລິມານ (Quantitative Research) ໂດຍກຳນົດເອົານະຄອນໄກສອນພົມວິຫານເປັນພື້ນທີ່ສຶກສາ ກຸ່ມຕົວຢ່າງທີ່ໃຊ້ໃນການຕອບແບບສອບຖາມ ຄືພຣະສົງ ແລະ ສາມະເນນ ຈາກວັດທີ່ມີປະຊາກອນ 10 ອົງຂຶ້ນໄປ ຈຳນວນ 25 ວັດ ລວມທັງໝົດ 230 ອົງ ໂດຍນຳໃຊ້ສູດ Taro Yamane. ໂດຍໃຊ້ທັງສະຖິຕິພັນລະນາ (ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າປ່ຽງເບນມາດຕະຖານ) ແລະ ສະຖິຕິອ້າງອີງ ໄດ້ແກ່ ການທົດສອບຄວາມແປປວນທາງດຽວ t-test, One-way ANOVA/F-test ພ້ອມການທົດສອບຄວາມແຕກຕ່າງລາຍຄູ່ດ້ວຍວິທີ Scheffé Test ແລະ ການວິເຄາະການຖົດຖອຍພະຫຸຄູນ (Multiple Regression Analysis).

ຜົນການສຶກສາພົບວ່າ ປັດໄຈສ່ວນບຸກຄົນດ້ານສະຖານະ, ອາຍຸ ແລະ ພັນສາ ບໍ່ໄດ້ເຮັດໃຫ້ລະດັບຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ ໃນຂະນະທີ່ລະດັບການສຶກສາທາງໂລກ, ປະຣຽນທຳ ແລະ ນັກທຳ ມີຄວາມແຕກຕ່າງກັນ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໃນບາງດ້ານ ແລະ ຫຼັກທຳມາພິບານໂດຍພາບລວມສາມາດພະຍາກອນ ແລະ ສົ່ງຜົນທາງບວກຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ແຕ່ເມື່ອພິຈາລະນາເປັນລາຍດ້ານ ພົບວ່າມີພຽງ 4 ດ້ານເທົ່ານັ້ນທີ່ສົ່ງຜົນຢ່າງມີຄວາມສຳຄັນ ຮຽງລຳດັບຈາກສູງໄປຫາຕ່ຳຄື ຫຼັກຄວາມຮັບຜິດຊອບ, ຫຼັກຄວາມໂປ່ງໃສ, ຫຼັກການມີສ່ວນຮ່ວມ ແລະ ຫຼັກຄວາມຄຸ້ມຄ່າ, ສ່ວນຫຼັກນິຕິທຳ ແລະ ຫຼັກຄຸນນະທຳ ບໍ່ສົ່ງຜົນຢ່າງມີຄວາມສຳຄັນທາງສະຖິຕິ.

ຄຳສຳຄັນ: ປະສິດທິຜົນການບໍລິຫານ, ຫຼັກທຳມາພິບານ, ຄະນະບໍລິຫານວັດ, ນະຄອນໄກສອນພົມວິຫານ

*** ຜູ້ປະສານງານ: ກະໂຕກ ແດງຄຳປານ**
e-mail: bnt93044@gmail.com

ພາກສະເໜີ

ນັບຕັ້ງແຕ່ສະໄໝພຸດທະການເປັນຕົ້ນມາ ພຣະພຸດທະສາສະໜາໄດ້ມີມາຢ່າງຍາວນານກວ່າ 2,500 ປີ ໂດຍມີພຣະທຳວິໄນທີ່ພຣະພຸດທະເຈົ້າບັນຍັດໄວ້ເປັນທັງຫຼັກຄຳສອນ ແລະ ມາດຕະຖານທາງສັງຄົມໃນການຈັດລະບຽບການຢູ່ຮ່ວມກັນຂອງຄະນະສົງ ໃນໄລຍະຜ່ານມາ, ການບໍລິຫານຈັດການວັດແມ່ນຍຶດຖືເອົາພຣະທຳວິໄນເປັນກົດເກນສູງສຸດ ເພື່ອທຳນຸບຳລຸງຄວາມຮຽບຮ້ອຍ ແລະ ສ້າງຄວາມເຫຼື້ອມໃສສັດທາໃຫ້ແກ່ສາສະນິກະຊົນ. ວັດວາອາຮາມຈຶ່ງໄດ້ກາຍເປັນສະຖາບັນຫຼັກທີ່ເປັນສູນກາງທາງດ້ານຈິດໃຈ, ວັດທະນະທຳ ແລະ ການສຶກສາ ທີ່ຄອຍກອມປະສານຄວາມສາມັກຄີ, ຫຼໍ່ລ້ຽງສິລະທຳ ແລະ ເປັນບ່ອນພັກພິງທາງຈິດວິນຍານຂອງຊຸມຊົນຕະຫຼອດມາ, ເຮັດໃຫ້ບົດບາດຂອງພຣະສົງມີຄວາມສັກສິດ ແລະ ເປັນທີ່ເຄົາລົບນັບຖືຢ່າງສູງໃນຖານະຜູ້ນຳທາງສິລະທຳຂອງສັງຄົມ.

ເຖິງຢ່າງໃດກໍຕາມ ໃນ ປັດຈຸບັນ, ທ່າມກາງກະແສການປ່ຽນແປງຂອງຍຸກໂລກາພິວັດ ທີ່ສົ່ງຜົນກະທົບຕໍ່ໂຄງສ້າງທາງດ້ານເສດຖະກິດ, ສັງຄົມ ແລະ ເຕັກໂນໂລຊີຢ່າງວ່ອງໄວ, ການບໍລິຫານຈັດການອົງກອນໃຫ້ມີປະສິດທິພາບຈຶ່ງກາຍເປັນປັດໄຈຕັດສິນຄວາມເຂັ້ມແຂງ ແລະ ຄວາມຍືນຍົງ ສຳລັບອົງການພຸດທະສາສະໜາສຳພັນລາວ, ການນຳເອົາຫຼັກທຳມາພິບານ (Good Governance) ເຂົ້າມາປະຍຸກໃຊ້ໃນການປົກຄອງສົງ ແມ່ນມີຄວາມຈຳເປັນຢ່າງຍິ່ງ ເພື່ອຍົກລະດັບການຄຸ້ມຄອງຊັບສິນ ແລະ ບຸກຄະລາກອນໃຫ້ມີຄວາມໂປ່ງໃສ , ສາມາດກວດສອບໄດ້ ແລະ ສອດຄ່ອງກັບລະບຽບກົດໝາຍໃນຍຸກໃໝ່ ແຕ່ຈາກສະພາບຕົວຈິງໃນເຂດປົກຄອງຄະນະສົງ ນະຄອນໄກສອນ ພົມວິຫານ ເຫັນວ່າການບໍລິຫານຈັດການວັດຍັງປະເຊີນກັບສິ່ງທ້າທາຍ ແລະ ຂໍ້ຄົງຄ້າງທີ່ເປັນອຸປະສັກຕໍ່ການພັດທະນາ ເຊິ່ງສະທ້ອນໃຫ້ເຫັນເຖິງຊ່ອງຫວ່າງໃນການນຳໃຊ້ຫຼັກການບໍລິຫານທີ່ທັນສະໄໝ, ບັນຫາທີ່ພົ້ນເດັ່ນ ແລະ ເປັນຂໍ້ຄົງຄ້າງສຳຄັນ ຄືລະບົບການເກັບກຳຂໍ້ມູນ ແລະ ການຕິດຕາມການເຄື່ອນໄຫວຂອງພຣະສົງ-ສາມະເນນ ທີ່ຍັງຂາດຄວາມລະອຽດ ແລະ ບໍ່ທັນເປັນລະບົບດີເທົ່າທີ່ຄວນ,

ເຮັດໃຫ້ເກີດຄວາມຫຍຸ້ງຍາກໃນການຄຸ້ມຄອງ ແລະ ນຳໄປສູ່ບັນຫາພຣະສົງບາງສ່ວນບໍ່ປະຕິບັດຕາມພຣະທຳວິໄນ, ເຫັນແກ່ປະໂຫຍດສ່ວນຕົວ ແລະ ລະເມີດທຳມະນູນປົກຄອງສົງ.

ນອກຈາກນັ້ນ, ຍັງພົບເຫັນບັນຫາໃນດ້ານການປະສານງານ ແລະ ການມີສ່ວນຮ່ວມ ລະຫວ່າງ ເຈົ້າອະທິການວັດ ກັບ ແນວໂຮມບ້ານ ແລະ ອຳນາດການປົກຄອງທ້ອງຖິ່ນ ທີ່ຍັງຂາດຄວາມກົມກຽວ, ໂດຍສະເພາະແມ່ນຄວາມຂັດແຍ່ງກ່ຽວກັບຄວາມໂປ່ງໃສໃນການບໍລິຫານຈັດການງົບປະມານການສ້າງສາ ແລະ ປະຕິສັງຂອນວັດ ທີ່ມັກເກີດຂຶ້ນຍ້ອນຂາດການຊີ້ແຈງຂໍ້ມູນຢ່າງຈະແຈ້ງຕໍ່ອອກຕິນຍາດໂຍມ. ຜູ້ວິໄຈໃນຖານະທີ່ເປັນພຣະສົງທີ່ຈຳຢູ່ນະຄອນໄກສອນ ພົມວິຫານ ຈຶ່ງເຫັນຄວາມຈຳເປັນໃນການສຶກສາ ແລະ ວິເຄາະຫຼັກທຳມາພິບານ ທີ່ສົ່ງຜົນປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ການຄົ້ນຄວ້າຄັ້ງນີ້ຈະຊ່ວຍຫາຈຸດບົກຜ່ອງ ແລະ ຫາແນວທາງການພັດທະນາການບໍລິຫານວັດໃຫ້ມີຄວາມທັນສະໄໝ, ໂປ່ງໃສ ແລະ ມີປະສິດທິພາບສູງສຸດ.

ການທົບທວນເອກະສານ

ທິດສະດີ ແລະ ແນວຄິດພື້ນຖານ

ການບໍລິຫານຈັດການ (Management) ແມ່ນຂະບວນການທີ່ເປັນລະບົບໃນການວາງແຜນ, ຈັດຕັ້ງ, ນຳພາ/ຊີ້ນຳ, ແລະ ຄວບຄຸມຊັບພະຍາກອນສຳຄັນຂອງອົງການ ເພື່ອບັນລຸເປົ້າໝາຍທີ່ກຳນົດໄວ້ລ່ວງໜ້າຢ່າງມີປະສິດທິພາບ (Efficiency) ແລະ ປະສິດທິຜົນ (Effectiveness) (ສີຣິພອນ ກະວິສາຍສຸນທອນ, 2016). ນັກວິຊາການຫຼາຍທ່ານໃຫ້ຄວາມໝາຍທີ່ສອດຄ່ອງກັນ ຄື Simon (1971) ອະທິບາຍວ່າເປັນກິດຈະກຳຂອງກຸ່ມບຸກຄົນທີ່ຮ່ວມມືກັນເພື່ອບັນລຸວັດຖຸປະສົງຮ່ວມກັນ. ສ່ວນ Hughes (1994) ເນັ້ນລະບົບຂະບວນການ, ຂໍ້ມູນຂ່າວສານ ແລະ ການປະຕິບັດກິດລະບຽບ, ຄວາມສຳຄັນຂອງການບໍລິຫານຈັດການປະກອບດ້ວຍ: (1) ການປະຫຍັດງົບປະມານ (Economy); (2) ປະສິດທິພາບ (Efficiency); (3) ປະສິດທິຜົນ (Effectiveness); (4) ຄວາມເປັນທຳ (Equity); ແລະ (5) ຄວາມຊື່ສັດ/ມີກຽດ (Honest and Honor) (Edwin, 1966). ໃນຂະນະທີ່ ໄພສານ ສຸຣິຍະມົງຄົນ (2008) ຊີ້ໃຫ້ເຫັນວ່າການບໍລິຫານທີ່ດີຊ່ວຍສ້າງຄວາມເຊື່ອໝັ້ນ, ເສີມສ້າງຄວາມແຂງແກ່ງໃຫ້ລະບົບຕ່າງໆ, ເພີ່ມສັກຍະພາບໃນການແຂ່ງຂັນໃນກະແສໂລກາພິວັດ ແລະ ສ້າງຖານຄວາມຮູ້ຮອບດ້ານຕໍ່ການປ່ຽນແປງ, Frederick W. Taylor ນັບວ່າເປັນບິດາແຫ່ງວິທະຍາສາດການຈັດການ (Scientific Management) ໂດຍສະເໜີຫຼັກການສຳຄັນ 4 ປະການ: (1) ກຳນົດວິທີການທີ່ດີທີ່ສຸດ (One Best Way); (2) ຄັດເລືອກ ແລະ ພັດທະນາຄົນງານ; (3) ໃຫ້ຄົນງານຍອມຮັບວິທີໃໝ່ ແລະ (4) ປະສານງານຮ່ວມມືຢ່າງໃກ້ຊິດ.

ຫຼັກການຈັດການທີ່ດີ ເປັນແນວຄວາມຄິດທີ່ເກີດຂຶ້ນໃນຍຸກກາຣິກບຸຮານ ແລະ ພັດທະນາຢ່າງຕໍ່ເນື່ອງໃນລະບົບປະຊາທິປະໄຕຕະຫຼາດ (Chagnon et al., 2003). ໃນສະພາບບົດຂອງ ສປປ ລາວ, ແນວຄິດນີ້ເຂົ້າມາມີບົດບາດນັບຕັ້ງແຕ່ນະໂຍບາຍກົນໄກເສດຖະກິດໃໝ່ (NEM) ປີ 1986 ເປັນຕົ້ນມາ ໂດຍເນັ້ນການປະຕິຮູບການບໍລິຫານລັດ, ຕໍ່ຕ້ານການສໍ້ລາດບັງຫຼວງ, ສ້າງຄວາມໂປ່ງໃສ ແລະ ການມີສ່ວນຮ່ວມຂອງປະຊາຊົນ.ຫຼັກການຈັດການທີ່ດີປະກອບດ້ວຍອົງປະກອບສຳຄັນຫຼາຍປະການ:ຫຼັກນິຕິທຳ (Rule of Law): ບຸກຄົນບໍ່ຖືກລົງໂທດເວັ້ນເສຍແຕ່ລະເມີດກົດໝາຍ, ບໍ່ມີຜູ້ໃດຢູ່ເໜືອກົດໝາຍ ແລະ ກົດໝາຍສູງສຸດມາຈາກຂະບວນການອັນຊອບທຳ (A.V. Dicey, 1959).ຫຼັກຄຸນນະທຳ (Morality): ປະກອບດ້ວຍສະພາບຄຸນງາມຄວາມດີທາງຄວາມປະພຶດ ແລະ ຈິດໃຈ, ຮັບປະກັນຄວາມຖືກຕ້ອງ ແລະ ຄວາມຍຸດຕິທຳ (ຈະຣອຍພອນ ທໍຣະນີ, 2013), ຫຼັກຄວາມໂປ່ງໃສ (Transparency): ເປີດເຜີຍຂໍ້ມູນການເງິນ, ດຳເນີນງານຢ່າງຊື່ສັດ, ຂໍ້ມູນກວດສອບໄດ້ ແລະ ມີຄວາມຖືກຕ້ອງ (ສະຣາວຸດ ທະຕະສີໂລ, 2023). ຫຼັກການມີສ່ວນຮ່ວມ (Participation): ເປີດໂອກາດໃຫ້ປະຊາຊົນມີສ່ວນຮ່ວມໃນການຕັດສິນໃຈ, ກຳນົດວິໄສທັດ ແລະ ຍຸດທະສາດ (ພຣະມະຫາສົມຍົດ ກົນຍານກິດຕິ, 2023; ແກ້ວສັນ ອະຕິໂພທິ, 1997). ຫຼັກຄວາມຮັບຜິດຊອບ (Accountability): ຜູ້ຮັບຜິດຊອບຕ້ອງພ້ອມອະທິບາຍ, ຊີ້ແຈງ ແລະ ຍອມຮັບຜົນຂອງການກະທຳ (ສຸດທະສີ ວົງສະມານ, 2001). ຫຼັກຄວາມຄຸ້ມຄ່າ (Value for Money): ເນັ້ນການນຳໃຊ້ຊັບພະຍາກອນທີ່ຈຳກັດໃຫ້ເກີດປະໂຫຍດສູງສຸດ ຄື ປະສິດທິພາບ, ປະສິດທິຜົນ ແລະ ຄວາມປະຢັດ (ຊະຕິນຸດ ໄຂສີ, 2023).

ປະສິດທິຜົນໃນການປະຕິບັດງານ (Performance Effectiveness) ໝາຍເຖິງຄວາມສາມາດຂອງບຸກຄົນໃນການນຳໃຊ້ຊັບພະຍາກອນທັງດ້ານຮ່າງກາຍ, ສະຕິປັນຍາ ແລະ ຈິດໃຈ ເພື່ອສ້າງຜົນງານທີ່ສອດຄ່ອງກັບເປົ້າໝາຍອົງການ (ພິງໄຊ ນັດຖະໂສພົນ, 2023) ຕົວຊີ້ວັດສຳຄັນປະກອບດ້ວຍ: ຜະລິດຕະພາບ (Productivity), ຜົນການປະຕິບັດງານ (Performance), ການຂາດງານ (Absenteeism), ການຍ້າຍເຂົ້າ-ອອກ (Turnover), ທັດສະນະຄະຕິ (Attitudes) ແລະ ຄວາມເຄັ່ງຕຶງ (Stress). Peterson & Plowman (1989) ກ່າວເຖິງອົງປະກອບ 4 ປະການໃນການວັດແທກປະສິດທິຜົນ: (1) ຄຸນນະພາບຂອງວຽກ; (2) ປະລິມານວຽກ; (3) ເວລາ ແລະ (4) ຄ່າໃຊ້ຈ່າຍ. ນອກຈາກນີ້, ການປະເມີນຜົນສາມາດແບ່ງເປັນ 3 ໄລຍະເວລາ: ປະເມີນລະຫວ່າງດຳເນີນງານ (Formative), ປະເມີນເມື່ອສິ້ນສຸດໂຄງການ (Summative) ແລະ ປະເມີນຍ້ອນຫຼັງ (Ex-post) (ເຢົາວະດີ ຣາງໄຊກຸນ, 2008).

2. ງານຄົ້ນຄວ້າທີ່ກ່ຽວຂ້ອງ

ພຣະຈິຣາວິດ ຖິຕະຍາໂນ ແລະ ພິນິດ ແກ້ວລໍາເກສດກອນ (2025) ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ປະສິດທິຜົນການບໍລິຫານຈັດການຄະນະສົງໃນເຂດພຣະນະຄອນ ກຸງເທບ ฯ ພົບວ່າປັດໄຈດ້ານການຈັດອົງກອນ, ການສັ່ງການ, ການປະສານງານ ແລະ ການຄວບຄຸມ ສົ່ງຜົນທາງບວກຮ່ວມກັນຄິດເປັນ 49.8% ຕໍ່ປະສິດທິຜົນ, ເສົາວະລັດ ດີລ້ວນ (2021) ສຶກສາບົດບາດພຣະສັງຄາທິການໃນຈັງຫວັດສະຣະບຸຣີ ພົບວ່າມີບົດບາດຢູ່ໃນລະດັບຫຼາຍ ແຕ່ຄວນເນັ້ນພັດທະນາບຸກຄະລາກອນຕາມປັດໄຈສ່ວນບຸກຄົນ. ພຣະສຸຣະສັກ ຈັດຕະພະໂຍ ກໍມາດ (2025) ສຶກສາການພັດທະນາງານປົກຄອງຄະນະສົງໃນຈັງຫວັດຂອນແກ່ນ ພົບວ່າຢູ່ໃນລະດັບດີ ($\bar{X}$ = 3.60) ໂດຍສະເພາະດ້ານການປົກຄອງ ແລະ ສາທາລະນະສົງເຄາະ, ພຣະຄູສັງຄະລັກ ທິຣະພັດ ອິດທິປັນຍາໂນ (2020) ສຶກສາການບໍລິຫານວັດຕາມຫຼັກທໍາມາພິບານໃນຈັງຫວັດສີງບຸຣີ ພົບວ່າຢູ່ໃນລະດັບດີ ແຕ່ຍັງມີບັນຫາຂາດແຄນຊັບພະຍາກອນທຶນ ແລະ ການປະສານງານລະຫວ່າງວັດກັບຊຸມຊົນ.

ວຸດທິພິງ ພິມທາດ (2023) ສຶກສາການບໍລິຫານຈັດການວັດຕາມ Good Governance ໃນຈັງຫວັດບຶງກາຣ ພົບວ່າຢູ່ໃນລະດັບຫຼາຍ ແລະ ສະເໜີໃຫ້ເນັ້ນຫຼັກຄຸນນະທໍາ, ຄວາມໂປ່ງໃສ ແລະ ການມີສ່ວນຮ່ວມ, ສິຣິພິງ ມີສຸວັນ (2023) ສຶກສາທໍາມາພິບານ ແລະ ແຮງຈູງໃຈຕໍ່ປະສິດທິຜົນການປະຕິບັດງານຂອງບຸກຄະລາກອນ ກົມການປົກຄອງ ຈັງຫວັດສະກົນນະຄອນ ພົບວ່າມີຄວາມສໍາພັນທາງບວກຢ່າງມີຄວາມສໍາຄັນ ($p < 0.01$), ລັດສະໝີ ແສນເສນ (2021) ສຶກສາຫຼັກທໍາມາພິບານຕໍ່ປະສິດທິຜົນການບໍລິຫານງານຂອງສໍານັກງານພຣະພຸດທະສາສະໜາ ພົບວ່າທໍາມາພິບານສາມາດພະຍາກອນຜົນໄດ້ 57.70% ໂດຍດ້ານຄວາມຄຸ້ມຄ່າ ($\beta = 0.223$), ນິຕິທໍາ ($\beta = 0.205$) ແລະ ຄວາມຮັບຜິດຊອບ ($\beta = 0.196$) ມີອິດທິພົນສູງສຸດ, ຊະຕິນຸດ ໄຂສີ (2023) ຢືນຢັນວ່າທໍາມາພິບານມີຄວາມສໍາພັນທາງບວກກັບປະສິດທິຜົນການປະຕິບັດງານຂອງອົງການບໍລິຫານສ່ວນຈັງຫວັດເພັດຊະບຸຣີ.

ສຸກັນຍາ ໂພທິຈາທຸມ (2020) ສຶກສາທໍາມາພິບານ ແລະ ຄຸນນະພາບການໃຫ້ບໍລິການສາທາລະນະ ພົບວ່າມີຄວາມສໍາພັນທາງບວກກັບຄວາມພຶງພໍໃຈຂອງຜູ້ຮັບບໍລິການ ($p < 0.01$), ກຸຕິຍາ ອິດສະອະເຣັດຕະກູນ (2024) ສຶກສາການບໍລິຫານອົງກອນຕາມຫຼັກການບ້ານເມືອງທີ່ດີຕໍ່ແຮງຈູງໃຈພະນັກງານ ພົບວ່າດ້ານນະໂຍບາຍ ($\beta = 0.297$) ແລະ ຄວາມສໍາພັນກັບພະນັກງານ ($\beta = 0.292$) ມີອິດທິພົນສູງສຸດ, ໂກເສກ ກຸດຕຸມ (2020) ສຶກສາອິດທິພົນຂອງທໍາມາພິບານຕໍ່ປະສິດທິຜົນການຈັດບໍລິການສາທາລະນະໃນທ້ອງຖິ່ນ ພົບວ່າດ້ານການມີສ່ວນຮ່ວມຂອງປະຊາຊົນ, ຄວາມສະເໝີພາບ, ການຄວບຄຸມ ແລະ ການປະສານງານມີອິດທິພົນສູງ, ອຸເທນ ພັນທະວີ (2023) ສຶກສາປັດໄຈການບໍລິຫານຕໍ່ທໍາມາພິບານໃນໂຮງຮຽນ ພົບວ່າດ້ານການບໍລິຫານຈັດການ, ພາວະຜູ້ນໍາ ແລະ ບັນຍາກາດອົງກອນສາມາດພະຍາກອນໄດ້ 72.00%.

3. ກອບແນວຄິດ ແລະ ການສັງເຄາະຄວາມຮູ້

ວັດໃນປະເທດລາວມີປະຫວັດຄວາມເປັນມາຍາວນານ ເລີ່ມແຕ່ສະໄໝອານາຈັກລ້ານຊ້າງ (ປີ 1353) ເມື່ອພຸດທະສາສະໜາໄດ້ຮັບການຮັບຮອງເປັນສາສະໜາປະຈໍາຊາດ. ວັດບໍ່ພຽງແຕ່ເປັນສູນກາງທາງສາສະໜາ ແຕ່ຍັງເປັນສູນກາງການສຶກສາ, ວັດທະນະທໍາ ແລະ ຊຸມຊົນ. ປັດຈຸບັນ, ການບໍລິຫານວັດຕ້ອງສອດຄ່ອງກັບ ທໍາມະນູນສົງລາວ ສະບັບປັບປຸງ (2022) ແລະ ແຜນພັດທະນາ 8 ສ. (ພຣະທໍາ ວໍຣະນາຍົກ, 2003). ອົງການພຸດທະສາສະໜາສໍາພັນລາວ (ອພສ) ແຂວງສະຫວັນນະເຂດ ປະກອບດ້ວຍຫ້ອງການບໍລິຫານງານ ແລະ ກໍາມາທິການຕ່າງໆ (ປົກຄອງ, ສຶກສາ, ເຜີຍແຜ່, ສາທາຣະນູປະການ, ຕ່າງປະເທດ) ເພື່ອຄຸ້ມຄອງພຣະສົງ-ສາມະເນນ ແລະ ກິດຈະກໍາຕາມທໍາມະວິໄນ ແລະ ກົດໝາຍຂອງລັດ ແລະ ງານຄົ້ນຄວ້າຫຼາຍບົດຊີ້ໃຫ້ເຫັນວ່າປັດໄຈສ່ວນບຸກຄົນ ຄື: ອາຍຸ, ເພດ, ພັນສາ, ລະດັບການສຶກສາ, ວຸດທິການສຶກສາ ແລະ ປະສົບການ ມີຜົນຕໍ່ການບໍລິຫານຈັດການ ແລະ ປະສິດທິຜົນ. ບຸນທອງ (2016) ແລະ ອະດຸນ ຈາຕຸຣົງຄະກຸນ (2002) ອະທິບາຍວ່າປັດໄຈເຫຼົ່ານີ້ເປັນເຄື່ອງມືສໍາຄັນໃນການແບ່ງສ່ວນຕະຫຼາດ ແລະ ກໍານົດກຸ່ມເປົ້າໝາຍ ເນື່ອງຈາກເປັນຂໍ້ມູນທີ່ວັດແທກໄດ້ງ່າຍ.

ກອບແນວຄິດ



ວິທີການຄົ້ນຄວ້າ

1. ປະຊາກອນ ແລະ ກຸ່ມຕົວຢ່າງທີ່ສຶກສາ

ການສຶກສາ ໄດ້ກຳນົດເອົາປະຊາກອນຄື ພຣະສົງ-ສາມະເນນ ຈາກວັດທັງໝົດ ໃນນະຄອນໄກສອນພົມວິຫານ ຈຳນວນ 86 ວັດມີຕຳ ນວນ 917 ອົງ, ເນື່ອງຈາກວ່າຂໍ້ຈຳກັດດ້ານເວລາ, ງົບປະມານ ແລະ ການເຂົ້າເຖິງພື້ນທີ່ ຜູ້ວິໃຈຈຶ່ງໃຊ້ການຄັດເລືອກກຸ່ມຕົວຢ່າງຂອງວັດ ແບບເຈາະຈົງ ເພື່ອໃຫ້ມີຄວາມເຊື່ອຖື ຈຶ່ງເລືອກວັດທີ່ມີຈຳນວນປະຊາກອນຄືພຣະສົງສາມະເນນ 10 ອົງຂຶ້ນ ຈາກວັດທັງໝົດ 86 ວັດ ຄັດ ເລືອກຈຳນວນ 25 ວັດ ເນື່ອງຈາກວັດກຸ່ມນີ້ເໝາະສົມຕໍ່ການເກັບຂໍ້ມູນ ແລະ ສອດຄ່ອງກັບຈຸດປະສົງການວິໃຈ ປະຊາກອນທີ່ອາໄສຢູ່ໃນ ວັດເຫຼົ່ານີ້ມີ 774 ອົງ ພຣະສົງ 234 ອົງ ສາມະເນນ 540 ອົງ ສາລັບຂະໜາດກຸ່ມຕົວຢ່າງທີ່ເໝາະສົມແມ່ນ 230 ອົງ.

2. ວິທີເກັບກຳຂໍ້ມູນ

ສຳລັບການເກັບກຳຂໍ້ມູນປະລິມານ ນັກສຶກສາໄດ້ແຈກແບບສຳຫຼວດໃຫ້ພຣະສົງ ແລະ ສາມະເນນ ທີ່ເປັນສະມາຊິກຄະນະ ບໍລິຫານວັດ ໃນ 25 ວັດທີ່ເລືອກ ຈຳນວນ 230 ຄົນ ໂດຍການໃຊ້ເວລາປະມານ 2 ເດືອນ (ເດືອນ ພຶດສະພາ ຫາ ເດືອນ ມິຖຸນາ) ການ ແຈກແບບສຳຫຼວດໄດ້ດຳເນີນໂດຍການລົງພື້ນຖານ ແລະ ອະທິບາຍຈຸດປະສົງຂອງການສຶກສາໃຫ້ຜູ້ຕອບແບບຮັບຮູ້ເຂົ້າໃຈ ພ້ອມທັງ ຮັບປະກັນໃນ ຄວາມເປັນສ່ວນຕົວຂອງຂໍ້ມູນ ຂໍ້ມູນທີ່ໄດ້ຮັບຈາກການເກັບກຳເຊີງປະລິມານ (Quantitative) ໄດ້ຖືກກວດສອບຄວາມ ຖືກຕ້ອງ ຄົບຖ້ວນ ແລະ ບໍ່ມີຂໍ້ມູນສູນເສຍກ່ອນບັນທຶກເຂົ້າລະບົບ SPSS ແລະ EXCEL ສຳລັບການວິເຄາະສະຖິຕິ ເພື່ອຮັບປະກັນ ຄວາມຖືກຕ້ອງ.

3. ການວິເຄາະຂໍ້ມູນໃນການສຶກສາ

ວິເຄາະຂໍ້ມູນທົ່ວໄປ ຂອງພຣະສົງສາມະເນນ ຕໍ່ການບໍລິຫານວັດຕາມຫຼັກທຳມາພິບານ ໂດຍຈຳແນກຕາມປັດໄຈສ່ວນບຸກຄົນ ວິເຄາະ: ສະຖານະ, ອາຍຸ, ພັນສາ ແລະ ວຸດທິການສຶກສາ ໃຊ້ສະຖິຕິ ຄວາມຖີ່ (Frequency) ແລະ ສ່ວນຮ້ອຍ (Percentage) ການ ວິເຄາະເພື່ອ ປຽບທຽບຄວາມຄິດເຫັນ ໂດຍໃຊ້ ສະຖິຕິອະນຸມານ (Inferential statistics) ເພື່ອປຽບທຽບປັດໄຈສ່ວນບຸກຄົນ ຕໍ່ປະ ສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ໃນນະຄອນໄກສອນພົມວິຫານ ການທົດສອບຄ່າຄວາມທີ (t-test) ໃນກໍລະນີທີ່ຕົວປ່ຽນ ຕົ້ນມີສອງກຸ່ມ, ວິທີການວິເຄາະຄວາມຜັນປ່ຽນທາງດຽວ (One-Way ANOVA) ແລະ ສາລັບວິເຄາະການບໍລິຫານວັດຕາມຫຼັກທຳມາ ພິບານ ທີ່ສົ່ງຜົນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ໃນນະຄອນໄກສອນພົມວິຫານ ໄດ້ນຳໃຊ້ການວິເຄາະສົມຜົນຖົດ ຖອຍແບບພະຫຸຄູນ Multiple Regression.

4. ວິທີການນຳສະເໜີຂໍ້ມູນ

ຜູ້ວິໃຈໄດ້ນຳສະເໜີໃນຮູບແບບຕາຕະລາງສະຖິຕິພື້ນຖານ (Descriptive Statistics) ປະກອບດ້ວຍ ຄ່າຖວງເສລີຍ (Mean) ຄ່າສ່ວນຮ້ອຍ (Percentage) ແລະ ຄ່າສ່ວນທຽບ (Standard Deviation) ເພື່ອສະແດງລັກສະນະທົ່ວໄປຂອງຂໍ້ມູນ ເຊັ່ນ ລັກສະນະທາງ ສັງຄົມຂອງຜູ້ຕອບແບບ ແລະ ລະດັບການປະເມີນຫຼັກທຳມາພິບານ ຂໍ້ມູນທີ່ກ່ຽວຂ້ອງກັບການທົດສອບສົມມຸຕິຖານຳສະເໜີໃນຮູບແບບ ຕາຕະລາງຜົນການວິເຄາະສະຖິຕິຂັ້ນສູງ ເຊັ່ນ ການທົດສອບ t-test ການທົດສອບ ANOVA ແລະ ການວິເຄາະການຖອດຮູບແບບການ ຖອດຮູບ (Multiple Regression) ພ້ອມກັບຄ່າ R ຄ່າ R^2 ຄ່າ Beta ແລະ ລະດັບຄວາມສຳຄັນທາງສະຖິຕິ (p-value) ທີ່ລະດັບ 0.05 ເພື່ອສະແດງຄວາມສຳພັນລະຫວ່າງຕົວປ່ຽນເອກະສັນ ແລະ ຕົວປ່ຽນອີ່ງໄສ.

ຜົນໄດ້ຮັບ

1 ຜົນການປຽບທຽບປັດໄຈສ່ວນບຸກຄົນ ຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ

ດ້ານສະຖານະພາບ ເຫັນວ່າ ໂດຍລວມແລ້ວ ຜູ້ຕອບແບບສອບຖາມທີ່ມີສະຖານະຕ່າງກັນ ມີຄວາມຄິດເຫັນຕໍ່ປະສິດທິຜົນການ ເຮັດວຽກຂອງຄະນະບໍລິຫານວັດ ບໍ່ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 t = -0.52, sig = 0.60. ເມື່ອພິຈາລະນາ ເປັນແຕ່ລະດ້ານ ເຫັນວ່າ ທຸກດ້ານ ບໍ່ມີຄວາມແຕກຕ່າງກັນເຊັ່ນດຽວັນ, ໂດຍມີຄ່າ sig ຫຼາຍກວ່າ 0.05.

ດ້ານອາຍຸ ເຫັນວ່າ ໂດຍລວມແລ້ວ ມີຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ບໍ່ແຕກຕ່າງກັນ ຢ່າງມີ ຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 0.45, sig = 0.81. ເມື່ອພິຈາລະນາເປັນແຕ່ລະດ້ານ ເຫັນວ່າ ທຸກດ້ານ ບໍ່ມີຄວາມແຕກຕ່າງ ກັນເຊັ່ນດຽວກັນ, ໂດຍມີຄ່າ sig ຫຼາຍກວ່າ 0.05 ປະກອບມີ: ວຽກງານການປົກຄອງສົງ F = 0.31, sig = 0.91, ວຽກງານການເຜີຍແຜ່ ສິລະທຳ ແລະ ປະຕິບັດຄຳສັ່ງມະຫາຄຳ F = 0.14, sig = 0.98, ວຽກງານດ້ານການພັດທະນາການສຶກສາສົງ F = 2.10, sig = 0.07, ວຽກງານດ້ານສາທາລະນູປະການ F = 0.24, sig = 0.94.

ດ້ານພັນສາ ເຫັນວ່າ ໂດຍລວມແລ້ວ ມີຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ບໍ່ແຕກຕ່າງກັນ ຢ່າງມີ ຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 2.19, sig = 0.07 ເມື່ອພິຈາລະນາເປັນແຕ່ລະດ້ານ ເຫັນວ່າ ສ່ວນໃຫຍ່ບໍ່ມີຄວາມແຕກຕ່າງ ກັນ, ໂດຍມີຄ່າ sig ຫຼາຍກວ່າ 0.05 ປະກອບມີ ວຽກງານການປົກຄອງສົງ F = 2.17, sig = 0.07, ວຽກງານການເຜີຍແຜ່ສິລະທຳ ແລະ

ປະຕິບັດຄຳສັ່ງມະຫາຄຳ F = 1.82, sig = 0.13, ວຽກງານດ້ານສາທາລະນູປະການ F = 1.44, sig = 0.22, ແຕ່ເຫັນວ່າ ມີພຽງ ດ້ານການພັດທະນາການສຶກສາສີງ ທີ່ມີຄວາມຄິດເຫັນ ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 2.54, sig = 0.04.

ດ້ານການສຶກສາທາງໂລກ ເຫັນວ່າ ໂດຍລວມແລ້ວ ມີຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 2.955, Sig = 0.021. ເມື່ອພິລະນາເປັນແຕ່ລະດ້ານ ເຫັນວ່າ ວຽກງານດ້ານການພັດທະນາການສຶກສາສີງ ມີຄວາມຄິດເຫັນ ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 3.711 ສ່ວນດ້ານອື່ນໆ ບໍ່ແຕກຕ່າງ ເຫດຜົນທີ່ເຮັດໃຫ້ໂດຍລວມແລ້ວ ພຣະສີງ-ສາມະເນນທີ່ມີລະດັບການສຶກສາທາງໂລກຕ່າງກັນ ມີຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດແຕກຕ່າງກັນຢ່າງມີຄວາມສຳຄັນ ໂດຍສະເພາະໃນດ້ານການພັດທະນາການສຶກສາສີງ, ເຖິງແມ່ນວ່າການວິເຄາະຄວາມປ່ຽນແປງທາງດຽວ ANOVA ຈະສະແດງໃຫ້ເຫັນວ່າຄວາມຄິດເຫັນໂດຍລວມ ແຕກຕ່າງກັນມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 2.955, Sig = 0.021 Sig < 0.05, ແຕ່ເມື່ອນຳມາທົດສອບຄວາມແຕກຕ່າງລາຍຄູ່ຢ່າງລະອຽດດ້ວຍວິທີການທີ່ເຂັ້ມງວດຢ່າງ Scheffé Test ແລ້ວ ເຫັນວ່າ ບໍ່ມີຄູ່ໃດທີ່ມີຄວາມແຕກຕ່າງກັນມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05. ຜົນການວິເຄາະການປຽບທຽບຄວາມຄິດເຫັນເປັນລາຍຄູ່ ລະຫວ່າງກຸ່ມຜູ້ຕອບແບບສອບຖາມທີ່ມີລະດັບການສຶກສາທາງໂລກຕ່າງກັນ ຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ດ້ານການພັດທະນາການສຶກສາສີງ ໂດຍໃຊ້ວິທີການປຽບທຽບພາຍຫຼັງ Post-Hoc Test ເຫັນວ່າ ກຸ່ມທີ່ຈົບ ຕ່ຳກວ່າມັດທະຍົມສຶກສາ ກັບ ກຸ່ມທີ່ຈົບ ປະລິນຍາຕີ ມີຄວາມຄິດເຫັນ ແຕກຕ່າງກັນ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 Mean Difference = -.74281, Sig = .020, ສ່ວນ ຄູ່ອື່ນໆ ບໍ່ມີຄວາມແຕກຕ່າງກັນມີຄວາມສຳຄັນທາງສະຖິຕິ.

ດ້ານການສຶກສາປະຣຽນ ເຫັນວ່າ ໂດຍລວມແລ້ວ ຜູ້ຕອບແບບສອບຖາມທີ່ມີລະດັບການສຶກສາປະຣຽນຕ່າງກັນ ມີຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ບໍ່ແຕກຕ່າງກັນ ມີຄວາມສຳຄັນທາງສະຖິຕິ F = 1.19, Sig = 0.31. ເມື່ອພິຈາລະນາເປັນແຕ່ລະດ້ານ ເຫັນວ່າ ວຽກງານການປົກຄອງສີງ ບໍ່ແຕກຕ່າງກັນ F = 0.11, Sig = 0.96, ວຽກງານການເຜີຍແຜ່ສີລະທຳ ແລະ ປະຕິບັດທຳກຳມະຖານ ມີຄວາມຄິດເຫັນ ແຕກຕ່າງກັນ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 F = 5.46, Sig = 0.001, ສ່ວນ ຄູ່ອື່ນໆ ບໍ່ມີຄວາມແຕກຕ່າງກັນມີຄວາມສຳຄັນທາງສະຖິຕິ ຄ່າ Sig ຫຼາຍກວ່າ 0.05. ຜົນການວິເຄາະການປຽບທຽບຄວາມຄິດເຫັນເປັນລາຍຄູ່ ຜູ້ຕອບແບບສອບຖາມທີ່ມີລະດັບການສຶກສາປະຣຽນຕ່າງກັນ ມີຄວາມຄິດເຫັນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ ດ້ານວຽກງານການເຜີຍແຜ່ສີລະທຳ ແລະ ປະຕິບັດທຳກຳມະຖານ ເຫັນວ່າ ຄູ່ທີ່ມີຄວາມຄິດເຫັນ ແຕກຕ່າງກັນ ມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ມີ ກຸ່ມທີ່ມີລະດັບການສຶກສາປະຣຽນ 4-9 ປະຣຽນ ກັບ ກຸ່ມທີ່ ຍັງບໍ່ໄດ້ປະຣຽນ Mean Difference = -1.29921, Sig = .010, ສ່ວນກຸ່ມລະດັບການສຶກສາປະຣຽນຄູ່ອື່ນໆ ກຸ່ມ 1-3 ປະຣຽນ ກັບ ກຸ່ມ 4-9 ປະຣຽນ Sig = .098 ແລະ ກຸ່ມ 1-3 ປະຣຽນ ກັບ ກຸ່ມ ຍັງບໍ່ໄດ້ປະຣຽນ Sig = .280 ມີຄວາມຄິດເຫັນ ບໍ່ແຕກຕ່າງກັນ ມີຄວາມສຳຄັນທາງສະຖິຕິ ຄ່າ Sig ຫຼາຍກວ່າ 0.05.

ດ້ານການສຶກສານັກທຳ ໂດຍລວມເຫັນວ່າ ຜູ້ຕອບແບບສອບຖາມທີ່ມີລະດັບການສຶກສານັກທຳແຕກຕ່າງກັນ ມີຄວາມຄິດເຫັນແຕກຕ່າງ ທີ່ລະດັບ 0.01 F = 3.695, Sig = 0.01. ເມື່ອພິຈາລະນາລາຍລະອຽດແຍກແຕ່ລະດ້ານ ເຫັນວ່າ ດ້ານວຽກງານການເຜີຍແຜ່ສີລະທຳ ແລະ ປະຕິບັດທຳກຳມະຖານ: ເຫັນວ່າ ຜູ້ຕອບແບບສອບຖາມທີ່ມີລະດັບການສຶກສາຕ່າງກັນ ມີຄວາມຄິດເຫັນແຕກຕ່າງກັນຢ່າງມີນ້ຳໜັກທາງສະຖິຕິ F = 6.99, Sig = 0.00 ແລະ ດ້ານວຽກງານສາທາລະນູປະການ: ເຫັນວ່າ ມີຄວາມຄິດເຫັນແຕກຕ່າງກັນຢ່າງມີນ້ຳໜັກທາງສະຖິຕິ F = 2.66, Sig = 0.05, ສ່ວນດ້ານອື່ນໆ ບໍ່ແຕກຕ່າງກັນ Sig > 0.05. ເມື່ອພິຈາລະນາ ລະຫວ່າງກຸ່ມລະດັບການສຶກສານັກທຳ ໂດຍໃຊ້ວິທີຂອງ Scheffé ທີ່ລະດັບຄວາມມີຄວາມສຳຄັນທາງສະຖິຕິ 0.05 ພົບຄູ່ທີ່ມີຄວາມແຕກຕ່າງກັນຢ່າງມີນ້ຳໜັກທາງສະຖິຕິ ຄູ່ລະຫວ່າງ ວຽກງານການປົກຄອງສີງ ກັບ ວຽກງານການເຜີຍແຜ່ສີລະທຳ ແລະ ປະຕິບັດທຳກຳມະຖານ ມີຄ່າຄວາມແຕກຕ່າງ Mean Difference = 1.3900 ແລະ ມີຄ່າ Sig. = 0.031 ແລະ ຄູ່ລະຫວ່າງ ວຽກງານການເຜີຍແຜ່ສີລະທຳ ແລະ ປະຕິບັດທຳກຳມະຖານ ກັບ ວຽກງານດ້ານສາທາລະນູປະການ ມີຄ່າຄວາມແຕກຕ່າງ Mean Difference = -1.07122 ແລະ ມີຄ່າ Sig. = 0.040, ສ່ວນ ຄູ່ອື່ນໆ ມີຄ່າ Sig. ຫຼາຍກວ່າ 0.05 p > 0.05 ບໍ່ແຕກຕ່າງກັນ ແລະ ເມື່ອພິຈາລະນາຜົນການທົດສອບຄວາມແຕກຕ່າງເປັນລາຍຄູ່ ລະຫວ່າງກຸ່ມລະດັບການສຶກສານັກທຳ (ປະກອບມີ: ນັກທຳຊັ້ນຕີ, ນັກທຳຊັ້ນໂທ, ນັກທຳຊັ້ນເອກ, ແລະ ຍັງບໍ່ໄດ້ນັກທຳ) ຕໍ່ຄວາມຄິດເຫັນດ້ານວຽກງານການເຜີຍແຜ່ສີລະທຳ ແລະ ປະຕິບັດທຳກຳມະຖານ ພົບຄູ່ທີ່ມີຄວາມແຕກຕ່າງກັນຢ່າງມີນ້ຳໜັກທາງສະຖິຕິທີ່ລະດັບ 0.05 ເຫັນວ່າ ກຸ່ມນັກທຳຊັ້ນຕີ ກັບ ນັກທຳຊັ້ນໂທ ມີຄ່າຄວາມແຕກຕ່າງ Mean Difference = 1.8800 ແລະ ມີຄ່າ Sig. = 0.006 ເຊິ່ງໜ້ອຍກວ່າ 0.05, ກຸ່ມນັກທຳຊັ້ນໂທ ເມື່ອທຽບກັບກຸ່ມອື່ນ: ທຽບກັບ ນັກທຳຊັ້ນເອກ: ມີຄ່າ Mean Difference = -1.44706 ແລະ Sig. = 0.017 ແລະ ທຽບກັບ ຍັງບໍ່ໄດ້ນັກທຳ: ມີຄ່າ Mean Difference = -1.77268 ແລະ Sig. = 0.001.

5.2 ຜົນການວິເຄາະຫຼັກທຳມາພິບານທີ່ສົ່ງຜົນຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານວັດ

ຕາຕະລາງທີ 1. ຄ່າສະຖິຕິພັນລະນາ ແລະ ການກວດສອບຄວາມເໝາະສົມ (Normality Test)

ຕົວປ່ຽນ	$\bar{X}$	S.D.	ຄ່າຄວາມເບ້	ຄ່າຄວາມຊັນ	ລະດັບ

X_1	ຫຼັກນິຕິທຳ (Rule of Law)	4.08	0.77	-0.97	1.05	ຫຼາຍ
X_2	ຫຼັກຄຸນນະທຳ (Ethics)	4.12	0.75	-1.03	1.28	ຫຼາຍ
X_3	ຫຼັກຄວາມໂປ່ງໃສ (Transparency)	4.12	0.73	-1.00	1.10	ຫຼາຍ
X_4	ຫຼັກການມີສ່ວນຮ່ວມ (Participation)	4.11	0.73	-0.94	1.03	ຫຼາຍ
X_5	ຫຼັກຄວາມຮັບຜິດຊອບ (Accountability)	4.13	0.75	-1.09	1.46	ຫຼາຍ
X_6	ຫຼັກຄວາມຄຸ້ມຄ່າ (Value for Money)	4.12	0.76	-1.09	1.35	ຫຼາຍ
Y	ປະສິດທິຜົນການເຮັດວຽກ	3.95	0.64	-0.39	0.13	ຫຼາຍ

ສະແດງເຖິງຜົນການວິເຄາະສະຖິຕິພັນລະນາຂອງຕົວປ່ຽນຕ່າງໆ ທີ່ປະກອບມີ ລະດັບຄວາມຄິດເຫັນຕໍ່ປັດໄຈຫຼັກທຳມາພິບານທັງ 6 ດ້ານ (X_1 - X_6) ແລະ ປະສິດທິຜົນການເຮັດວຽກ (Y) ໃນພາບລວມ ຢູ່ໃນລະດັບ ຫຼາຍ ທັງໝົດ. ເມື່ອພິຈາລະນາຜົນການກວດສອບການແຈກແຈງຄວາມຖີ່ (Normality Test) ເຫັນວ່າ ຕົວແປທັງໝົດມີຄ່າຄວາມເບ້ (Skewness) ຢູ່ລະຫວ່າງ -1.09 ຫາ -0.39 ແລະ ຄ່າຄວາມຊັນ (Kurtosis) ຢູ່ລະຫວ່າງ 0.13 ຫາ 1.46, ເຊິ່ງ Kline (2011) ແມ່ນໄດ້ກ່າວວ່າ ຄ່າສົມບູນຂອງຄວາມບ້ຽວ (Absolute value of Skewness) ທີ່ຫຼາຍກວ່າ ± 3 ແລະ ຄ່າຄວາມໂດ່ງ (Kurtosis) ທີ່ຫຼາຍກວ່າ ± 10 ສະແດງວ່າຂໍ້ມູນມີການແຈກແຈງເປັນໂຄ້ງປົກກະຕິ ສາມາດນຳໄປວິເຄາະສະຖິຕິຂັ້ນສູງ (Regression) ໄດ້ຢ່າງເໝາະສົມ.

ຕາຕະລາງ 2 ຜົນການທົດສອບຄວາມແປຜັນຂອງຄ່າຄວາມຄາດເຄື່ອນຄົງທີ່ (Heteroscedasticity Test: Breusch-Pagan)

ຕົວປ່ຽນຕາມ (Dependent Variable)	ຄ່າ (R^2)	ຄ່າ Chi-Square (X^2)	ຈຳນວນ (df)	ຄ່າ (Sig.)	ຜົນການທົດສອບ
EFF_ADM (ປະສິດທິຜົນການເຮັດວຽກ)	0.013	2.99	6	0.826	ບໍ່ມີບັນຫາ Heteroscedasticity

ຜົນການວິເຄາະສະແດງໃຫ້ເຫັນວ່າ ຄ່າສະຖິຕິ Chi-Square ເທົ່າກັບ 2.99 ແລະ ມີຄ່າ p-value ເທົ່າກັບ 0.826 ເຊິ່ງມີຄ່າ ຫຼາຍກວ່າລະດັບຄວາມ ລຳຄັນຄັນທາງສະຖິຕິ 0.05 (p > 0.05). ດັ່ງນັ້ນ ຈຶ່ງຍອມຮັບສົມມຸດຕິຖານຫຼັກ (H_0) ທີ່ວ່າຄວາມແປຜັນຂອງຄ່າຄວາມຄາດເຄື່ອນມີຄວາມຄົງທີ່ ສະຫຼຸບໄດ້ວ່າ ຕົວແບບການຖົດຖອຍ ບໍ່ມີບັນຫາ Heteroscedasticity ຜ່ານເກນມາດຕະຖານ ແລະ ຄວາມໜ້າເຊື່ອຖືຂອງແບບຈຳລອງສາມາດນຳໄປໃຊ້ໃນການວິເຄາະຜົນກະທົບຕໍ່ໄປໄດ້ຢ່າງເໝາະສົມ.

ຕາຕະລາງທີ 2. ຜົນການທົດສອບຄ່າສຳປະສິດຄວາມສຳພັນຂອງ ຫຼັກທຳມາພິບານທີ່ສົ່ງຜົນປະສິດທິຜົນການເຮັດວຽກຄະນະບໍລິຫານວັດ

	X_1	X_2	X_3	X_4	X_5	X_6	Y
X_1	1						
X_2	0.972871	1					
X_3	0.933811	0.976173	1				
X_4	0.885763	0.929586	0.964664	1			
X_5	0.807549	0.868726	0.9228	0.968269	1		
X_6	0.730584	0.791784	0.857247	0.919003	0.973134	1	
Y	0.619802	0.632273	0.639542	0.670848	0.677324	0.687643	1

ຜົນການວິເຄາະຄ່າຄວາມສຳພັນ (Pearson Correlation) ລະຫວ່າງຕົວປ່ຽນອິດສະຫຼະແຕ່ລະດ້ານ ກັບ ປະສິດທິຜົນ (ຕົວປ່ຽນຕາມ), ເຫັນວ່າ: ດ້ານຫຼັກນິຕິທຳ ມີຄວາມສຳພັນທາງບວກກັບປະສິດທິຜົນ ໃນລະດັບປານກາງ (r = 0.619), ດ້ານຄຸນນະທຳ ມີຄວາມສຳພັນທາງບວກກັບປະສິດທິຜົນ ໃນລະດັບປານກາງ (r = 0.632), ດ້ານຄວາມໂປ່ງໃສ ມີຄວາມສຳພັນທາງບວກກັບປະສິດທິຜົນ ໃນລະດັບປານກາງ (r = 0.639), ດ້ານການມີສ່ວນຮ່ວມ ມີຄວາມສຳພັນທາງບວກກັບປະສິດທິຜົນ ໃນລະດັບປານກາງ (r = 0.670), ດ້ານຄວາມຮັບຜິດຊອບ: ມີຄວາມສຳພັນທາງບວກກັບປະສິດທິຜົນ ໃນລະດັບປານກາງ (r = 0.677), ດ້ານຄວາມຄຸ້ມຄ່າ ມີຄວາມສຳພັນທາງບວກກັບປະສິດທິຜົນ ໃນລະດັບປານກາງ (r = 0.687) ເຊິ່ງເປັນດ້ານທີ່ມີຄ່າຄວາມສຳພັນສູງທີ່ສຸດ. ຈາກການວິເຄາະຄວາມສຳພັນລະຫວ່າງຕົວປ່ຽນອິດສະຫຼະນຳກັນເອງ ເຫັນວ່າຕົວປ່ຽນມີຄ່າຄວາມສຳພັນສູງ, ເຊິ່ງເມື່ອນຳມາທົດສອບຄວາມພົວພັນຊ້ຳຊ້ອນດ້ວຍຄ່າຄວາມປ່ຽນຜັນ (Variance Inflation Factor: VIF) ເຫັນວ່າຄ່າ VIF ຂອງທຸກຕົວປ່ຽນຢູ່ໃນຊ່ວງ 2.495 ເຖິງ 4.205 ເຊິ່ງຕ່ຳກວ່າເກນມາດຕະຖານທີ່

ກຳນົດໄວ້ (< 5.00), ສະແດງວ່າຕົວແບບການຖົດຖອຍ ບໍ່ມີບັນຫາ Multicollinearity ຢ່າງຮ້າຍແຮງ ແລະ ຕົວປ່ຽນອິດສະຫຼະທັງໝົດ ມີຄວາມເໝາະສົມສຳລັບນຳໄປວິເຄາະສົມການຖົດຖອຍຫຼາຍຕົວປ່ຽນ (Multiple Linear Regression) ໃນຂັ້ນຕອນຕໍ່ໄປ.

ຕາຕະລາງທີ 3 ການວິເຄາະ Multiple Regression

ຕົວແປອິດສະຫຼະ (ປັດໄຈX)	Unstandardized Coefficient		Standardized Coefficient	ຄ່າ t	Sig. (p)	VIF
	B	SE	ຄ່າ β			
ຄ່າຄົງທີ່ Constantβ_0	0.603	.156		3.868	0.000	
X_1	0.015	0.056	0.015	0.272	0.786	2.495
X_2	0.001	0.057	0.002	0.026	0.979	3.576
X_3	0.139	0.056	0.160	2.481	0.014*	3.281
X_4	0.141	0.059	0.167	2.390	0.018*	3.829
X_5	0.279	0.068	0.302	4.124	0.000*	4.205
X_6	0.261	0.062	0.283	4.226	0.000*	3.518
Adjusted R^2 = 0.709 F = 93.966 Sig. F = 0.000 (* p <= 0.05)						

ເຫັນວ່າ ປັດໄຈຫຼັກທຳມາພິບາມທັງ 6 ດ້ານ (X_1 - X_6) ສາມາດຮ່ວມກັນພະຍາກອນປະສິດທິຜົນການເຮັດວຽກຂອງຄະນະບໍລິຫານອັດ (Y) ໄດ້ເຖິງ 70.9% (Adjusted R^2 = 0.709) ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 (F = 93.966, p = 0.000) ເມື່ອພິຈາລະນາເປັນລາຍດ້ານ ເຫັນວ່າມີ 4 ດ້ານທີ່ສິ່ງຜົນສະທ້ອນທາງບວກ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໂດຍລຽງລຳດັບຄວາມສຳຄັນ ດັ່ງນີ້:ຫຼັກຄວາມຮັບຜິດຊອບ (X_5): ສິ່ງຜົນສູງທີ່ສຸດ (β = 0.302, p = 0.000), ຫຼັກຄວາມຄຸ້ມຄ່າ (X_6): (β = 0.283, p = 0.000), ຫຼັກການມີສ່ວນຮ່ວມ (X_4): (β = 0.167, p = 0.018) ແລະ ຫຼັກຄວາມໂປ່ງໃສ (X_3): (β = 0.160, p = 0.014) ສ່ວນດ້ານຫຼັກນິຕິທຳ (X_1) ແລະ ຫຼັກຄຸນນະທຳ (X_2) ແມ່ນບໍ່ມີຜົນຕໍ່ປະສິດທິຜົນການເຮັດວຽກຢ່າງມີຄວາມສຳຄັນທາງສະຖິຕິ, ນອກຈາກນີ້, ຄ່າ VIF ຢູ່ລະຫວ່າງ 2.49 ຫາ 4.20 ທຸກຕົວແປມີຄ່າຕ່ຳກວ່າທີ່ Akinwande et al. (2015) ແລະ ນັກສະຖິຕິສ່ວນໃຫຍ່ ໄດ້ກຳນົດໄວ້ວ່າ ຖ້າຄ່າ VIF ມີຄ່າຫຼາຍກວ່າ 10.00 ຈະຊີ້ໃຫ້ເຫັນເຖິງການເກີດບັນຫາ multicollinearity ທີ່ມີຄວາມສຳຄັນ ແລະ ຮ້າຍແຮງ ຢ່າງໃດກໍຕາມ ໃນການວິໄຈດ້ານບໍລິຫານຈັດການ ແລະ ສັງຄົມສາດທີ່ມີຄວາມເຂັ້ມງວດສູງ ນັກຄົ້ນຄວ້າມັກຈະນຳໃຊ້ເກນທີ່ຮັດກຸມຍິ່ງຂຶ້ນ ໂດຍກຳນົດວ່າຄ່າ VIF ບໍ່ຄວນເກີນ 5.00 ສະແດງວ່າບໍ່ເກີດບັນຫາຕົວແປສຳພັນກັນເອງ (Multicollinearity) ດັ່ງນັ້ນ ຈຶ່ງເປັນສົມຜົນທີ່ສາມາດນຳໄປພະຍາກອນໄດ້ໂດຍນຳມາຂຽນເປັນສົມຜົນ ຖົດຖອຍພະຫຸຄູນໃນຮູບຂອງຄະແນນດິບ ແລະ ຄະແນນມາດຕະຖານ ໄດ້ດັ່ງນີ້:

1. ສົມຜົນການພະຍາກອນໃນຮູບຄະແນນດິບ (Y)

$Y = 0.603 + 0.015(X_1) + 0.001(X_2) + 0.139(X_3^*) + 0.141(X_4^*) + 0.279(X_5^*) + 0.261(X_6^*)$

2. ສົມຜົນການພະຍາກອນໃນຮູບຄະແນນມາດຕະຖານ (Z_Y)

$Z_Y = 0.015(Z_Y) + 0.002(Z_Y + 0.160(Z_Y + 0.167(Z_Y) + 0.302(Z_Y) + 0.283(Z_Y)$

ອະພິປາຍຜົນ

1. ດ້ານປັດໄຈສ່ວນບຸກຄົນທີ່ມີຜົນຕໍ່ການເຮັດວຽກຂອງຄະນະບໍລິຫານອັດ

ດ້ານພັນສາໃນພາບລວມ ບໍ່ແຕກຕ່າງກັນ Sig ຫຼາຍກວ່າ 0.05 ແລະ ດ້ານທີ່ມີຄວາມແຕກຕ່າງກັນ ມີ ວຽກງານດ້ານການພັດທະນາ ການສຶກສາສິ່ງດ້ານດຽວເທົ່າກັນ ທີ່ເຫັນວ່າພະຣສິ ສາມະເນນ ທີ່ມີພັນສາຕ່າງກັນ ມີຄວາມຄິດເຫັນຕໍ່ການປະຕິບັດບົດບາດ ແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.04 F = 2.54, Sig = 0.04 < 0.05 ເຊິ່ງຜ່ານການກວດສອບຄວາມແຕກຕ່າງເປັນລາຍຄູ່ດ້ວຍວິທີຂອງ Scheffe's ແລ້ວ ຍັງບໍ່ພົບຄູ່ໃດທີ່ມີຄວາມແຕກຕ່າງກັນຢ່າງຊັດເຈນທີ່ລະດັບຄວາມເຊື່ອໝັ້ນ 0.05.

ດ້ານລະດັບການສຶກສາທາງໂລກ ໃນພາບລວມ ແລະ ບາງດ້ານແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ ໂດຍສະເພາະດ້ານການພັດທະນາສຶກສາ ແລະ ດ້ານສາທາລະນະສິງເຄາະ ທີ່ມີຄ່າ Sig ເທົ່າກັບ 0.006 ແລະ 0.021 ແລະ ເມື່ອນຳມາທົດສອບຄວາມແຕກຕ່າງລາຍຄູ່ໂດຍລວມ ຢ່າງລະອຽດດ້ວຍວິທີການທີ່ເຂັ້ມງວດຢ່າງ Scheffé Test ແລ້ວ ເຫັນວ່າ ບໍ່ມີຄູ່ໃດທີ່ມີຄວາມແຕກຕ່າງ ແຕ່ວ່າ ເມື່ອນຳມາທົດສອບຄວາມແຕກຕ່າງເປັນລາຍຄູ່ລະຫວ່າງກຸ່ມທີ່ມີວຸດທິການສຶກສາທາງໂລກກັບປະສິດທິຜົນການເຮັດວຽກ ດ້ານການ

ພັດທະນາການສຶກສາສີງ ປະກົດວ່າມີຄູ່ທີ່ມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ໄດ້ແກ່ ກຸ່ມທີ່ມີວຸດທິການສຶກສາລະດັບປິນຍາຕີ ກັບ ກຸ່ມທີ່ມີວຸດທິການສຶກສາລະດັບ ປິນຍາໂທ ທີ່ມີຄ່າ Mean Difference=74281 Sig =.020 ຊຶ່ງໜ້ອຍກວ່າ 0.05 ຊຶ່ງສອດຄ່ອງກັບຜົນການວິໄຈຂອງ ເສົາວະລັດ ດີລ້ວນ (2021) ທີ່ໄດ້ລະບຸໄວ້ວ່າ ປັດໄຈດ້ານວຸດທິການສຶກສາມີຜົນເຮັດໃຫ້ຄວາມຄິດເຫັນຕໍ່ການບໍລິຫານກິດການຄະນະສີງແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ ໂດຍສະເພາະການສຶກສາທາງໂລກທີ່ມີຜົນແຕກຕ່າງກັນໃນທຸກດ້ານ ເຊິ່ງສະທ້ອນໃຫ້ເຫັນວ່າພື້ນຖານການສຶກສາທີ່ແຕກຕ່າງສົ່ງຜົນໂດຍກົງຕໍ່ການຮັບຮູ້ ແລະ ການຕີລາຄາບົດບາດການບໍລິຫານງານຂອງຄະນະສີງໃນພື້ນທີ່.

ດ້ານລະດັບການສຶກສາປຣຽນທຳ ພົບວ່າ ໃນພາບລວມບໍ່ປາກົດຄວາມແຕກຕ່າງ ແຕ່ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ດ້ານການເຜີຍແຜ່ສາດສະໜາ ແລະ ການປະຕິບັດທຳກຳມະຖານ ມີຄວາມຄິດເຫັນແຕກຕ່າງກັນ ໂດຍ F = 5.46 ແລະ Sig = 0.00 ຊຶ່ງນ້ອຍກວ່າ 0.05.ເມື່ອນຳຜົນໄປທົດສອບລາຍຄູ່ດ້ວຍ Scheffé Test ພົບວ່າ ກຸ່ມທີ່ມີວຸດທິການສຶກສາປຣຽນທຳ 4–9 ປຣຽນ ກັບ ກຸ່ມທີ່ຍັງບໍ່ໄດ້ປຣຽນທຳ ມີຄວາມຄິດເຫັນແຕກຕ່າງກັນ ໂດຍ Mean Difference = -1.29921 ແລະ Sig = 0.010. ຜົນນີ້ອາດສະທ້ອນໃຫ້ເຫັນວ່າ ການສຶກສາປຣຽນທຳໃນລະດັບສູງ ເຮັດໃຫ້ພຣະສີງມີພື້ນຖານຄວາມຮູ້ທາງພຣະພຸດທະສາສະໜາ, ການແປ, ການອະທິບາຍທຳ ແລະ ລະບຽບວິໄນທາງພຣະສາສະໜາຫຼາຍຂຶ້ນ ເມື່ອນຳຄວາມຮູ້ໄປໃຊ້ໃນການສອນ, ການເຜີຍແຜ່ ແລະ ການປະຕິບັດທຳ ຈຶ່ງອາດມີມາດຕະຖານ ແລະ ຄວາມຄາດຫວັງສູງກວ່າ ໃນຂະນະທີ່ກຸ່ມທີ່ຍັງບໍ່ໄດ້ປຣຽນທຳ ອາດອາໄສປະສົບການ, ຈາຣີດປະເພນີ ຫຼື ການຮຽນຮູ້ຈາກການປະຕິບັດຈິງເປັນຫຼັກ. ດັ່ງນັ້ນ ພື້ນຖານການຮຽນຮູ້ທີ່ຕ່າງກັນ ຈຶ່ງອາດນຳໄປສູ່ມຸມມອງ ແລະ ມາດຕະຖານໃນການປະເມີນວຽກງານການເຜີຍແຜ່ ແລະ ການປະຕິບັດທຳກຳມະຖານທີ່ຕ່າງກັນ.ຜົນການວິໄຈນີ້ສອດຄ່ອງກັບ ພຣະຄູສັງຂະລັກ ທິຣະພັດ ອິດທິປັນຍາໂນ (2020) ທີ່ພົບວ່າ ລະດັບປະສົບການ ແລະ ການສຶກສາທີ່ແຕກຕ່າງກັນ ສົ່ງຜົນຕໍ່ຄວາມຄາດຫວັງ ແລະ ມຸມມອງຕໍ່ການບໍລິຫານຈັດການ. ພຣະສີງທີ່ມີພື້ນຖານການສຶກສາປຣຽນທຳສູງ ຍ່ອມມີຄວາມຮູ້, ມຸມມອງ, ມາດຕະຖານ ແລະ ຄວາມຄາດຫວັງຕໍ່ການຈັດກິດຈະກຳການເຜີຍແຜ່ສາດສະໜາທີ່ເຂັ້ມຂຸ້ນກວ່າ.

ດ້ານລະດັບການສຶກສານັກທຳ ຜົນການວິເຄາະພົບວ່າ ພຣະສີງ ແລະ ສາມະເນນທີ່ມີລະດັບການສຶກສານັກທຳຕ່າງກັນ ມີຄວາມຄິດເຫັນຕໍ່ປັດໄຈຫຼັກທຳມາພົບານ ແລະ ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານອັດແຕກຕ່າງກັນ ໂດຍ F = 3.695 ແລະ Sig = 0.01 ຊຶ່ງນ້ອຍກວ່າ 0.05. ຜົນດັ່ງກ່າວສະແດງວ່າ ລະດັບການສຶກສານັກທຳເປັນປັດໄຈສ່ວນບຸກຄົນທີ່ມີສ່ວນກຳນົດມຸມມອງຕໍ່ການບໍລິຫານອັດ.ເມື່ອທົດສອບລາຍຄູ່ດ້ວຍ Scheffé ພົບວ່າ ຄູ່ລະຫວ່າງກຸ່ມນັກທຳຊັ້ນໂທ ກັບ ກຸ່ມນັກທຳຊັ້ນເອກ ມີຄວາມແຕກຕ່າງ ໂດຍ Mean Difference = -1.39000 ແລະ Sig = 0.031 ແລະ ຄູ່ລະຫວ່າງນັກທຳຊັ້ນໂທ ກັບ ກຸ່ມທີ່ຍັງບໍ່ໄດ້ນັກທຳ ມີ M.D = -1.07122 ແລະ Sig = 0.040. ຜົນນີ້ສະທ້ອນວ່າ ກຸ່ມທີ່ມີລະດັບນັກທຳຕ່າງກັນ ມີພື້ນຖານຄວາມຮູ້ທາງພຣະພຸດທະສາສະໜາ ແລະ ການຝຶກຝົນດ້ານທຳມະວິໄນບໍ່ຄືກັນ ຈຶ່ງອາດມີມາດຕະຖານ ແລະ ຄວາມຄາດຫວັງຕໍ່ການບໍລິຫານອັດແຕກຕ່າງກັນ ໂດຍສະເພາະ ຜູ້ທີ່ຜ່ານການສຶກສານັກທຳໃນລະດັບສູງ ອາດມີຄວາມຄຸ້ນເຄີຍກັບຫຼັກທຳ, ລະບຽບວິໄນ ແລະ ຫຼັກການທາງພຣະພຸດທະສາສະໜາຫຼາຍກວ່າ ເມື່ອຕ້ອງປະເມີນການບໍລິຫານອັດ ຫຼື ການຈັດກິດຈະກຳທາງສາສະໜາ ຈຶ່ງອາດໃຊ້ເກນທີ່ເຂັ້ມງວດກວ່າກຸ່ມອື່ນ ຜົນການວິໄຈນີ້ສອດຄ່ອງກັບ ພຣະສຸຣະສັກ ຈັຕຕະພະໂຍ (ກໍມາດ) ພ້ອມຄະນະ (2025) ທີ່ສຶກສາການພັດທະນາງານປົກຄອງຄະນະສີງໃນເຂດອຳເພີເມືອງຂອນແກ່ນ ຈັງຫວັດຂອນແກ່ນ ແລະ ພົບວ່າ ພຣະສີງທີ່ມີລະດັບການສຶກສານັກທຳຕ່າງກັນ ມີຄວາມຄິດເຫັນຕໍ່ການພັດທະນາງານປົກຄອງຄະນະສີງແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

2. ດ້ານປັດໄຈຫຼັກທຳມາພົບານສົ່ງຜົນຕໍ່ປະສິດທິຜົນການເຮັດວຽກ

ເປັນຕົວແປອິດສະຫຼະທີ່ສົ່ງຜົນທາງບວກສູງທີ່ສຸດຕໍ່ປະສິດທິຜົນການເຮັດວຽກຂອງຄະນະບໍລິຫານອັດ ໃນນະຄອນໄກສອນ ພົມວິຫານ ໂດຍມີຄ່າສຳປະສິດການຖົດຖອຍໃນຮູບແບບມາດຕະຖານ ($\beta = 0.42$) ພ້ອມທັງຜ່ານການທົດສອບຄ່າສະຖິຕິ t ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ($t = 4.12$, $p < 0.05$) ຂໍ້ຄົ້ນພົບໃນຈຸດນີ້ສາມາດວິພາກໄດ້ວ່າ ໃນລະບົບການບໍລິຫານຈັດການອົງກອນສີງຍຸກປັດຈຸບັນ ເຊິ່ງມີຄວາມຊັບຊ້ອນ ແລະ ມີພາລະງານເພີ່ມຂຶ້ນຢ່າງຫຼວງຫຼາຍ ທັງໃນດ້ານການປົກຄອງຄະນະສີງ, ການສຶກສາສີງ, ງານເຜີຍແຜ່ສີລະທຳ ແລະ ງານສາທາລະນູປະການ (ການກໍ່ສ້າງປະຕິສັງຂອນ) ການທີ່ພຣະສີງ-ສາມະເນນ ແລະ ຄະນະກຳມະການວັດມີຄວາມຕື່ນຕົວ, ຮູ້ຈັກພາລະບົດບາດ, ສິດ, ໜ້າທີ່ ແລະ ມີຈິດສຳນຶກໃນຕຳແໜ່ງທີ່ຕົນເອງຮັບຜິດຊອບຢ່າງຊັດເຈນ ຈະເປັນກົນໄກສຳຄັນທີ່ປ້ອງກັນບໍ່ໃຫ້ເກີດການປະລະໜ້າທີ່ ຜົນການວິໄຈນີ້ສອດຄ່ອງກັບ ພຣະຄູສັງຂະລັກ ທິຣະພັດ ອິດທິປັນໂຍ (2020) ທີ່ເຫັນວ່າ ຫຼັກຄວາມຮັບຜິດຊອບ ໂດຍສະເພາະຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ຕາມພຣະທຳມະວິໄນ ແລະ ກົດໝາຍຄະນະສີງ ຂອງຜູ້ບໍລິຫານວັດ ແລະ ພຣະພິກສຸສາມະເນນ ເປັນປັດໄຈສຳຄັນທີ່ຊ່ວຍໃຫ້ໂຄງສ້າງການດຳເນີນງານຂອງວັດມີຄວາມເປັນລະບຽບ ນອກຈາກນີ້ ຍັງສອດຄ່ອງກັບ ລັດສະໝີ ແສນເສນ (2021) ທີ່ພົບວ່າ ຫຼັກຄວາມຮັບຜິດຊອບຕໍ່ຜົນການປະຕິບັດງານ ເປັນປັດໄຈຂັບເຄື່ອນສຳຄັນທີ່ສົ່ງຜົນທາງບວກຕໍ່ປະສິດທິຜົນການບໍລິຫານງານໃນບໍລິບົດກິດຈະການພຣະພຸດທະສາສະໜາ.

ດ້ານຫຼັກຄວາມໂປ່ງໃສ ກໍໄດ້ສົ່ງຜົນທາງບວກຮອງລົງມາຢ່າງມີຄວາມສຳຄັນທາງສະຖິຕິ ໂດຍມີຄ່າສຳປະສິດການຖົດຖອຍ ($\beta = 0.31$) ແລະ ຄ່າສະຖິຕິ t ຜ່ານເກນມາດຕະຖານຢ່າງມີນັນສຳຄັນ ($t = 3.25$, $p < 0.05$) ເຊິ່ງສາມາດວິພາກເຊື່ອມໂຍງກັບສະພາບບັນຫາ

ຕົວຈິງໃນສັງຄົມປັດຈຸບັນໄດ້ວ່າ ປະເດັນເລື່ອງ ການເງິນສີງ ແລະ ປັດໄຈບໍລິຈາກ ຖືເປັນຈຸດອ່ອນ ແລະ ເປັນສາເຫດຂອງຂໍ້ຂັດແຍ່ງຫຼັກ ທີ່ເຮັດລາຍຄວາມສັດທາຂອງອອກຕົນຍາດໂຍມຫຼາຍທີ່ສຸດ ຂໍ້ຄົ້ນພົບນີ້ ສອດຄ່ອງກັບຜົນການສຶກສາຂອງ ວຸດທິພິງ ພົມທາດ (2023) ທີ່ໄດ້ສຶກສາການບໍລິຫານຈັດການວັດຕາມຫຼັກທຳມາພົບານ ເຊິ່ງພົບຂໍ້ສະຫຼຸບວ່າ ຫຼັກຄວາມໂປ່ງໃສ ໂດຍສະເພາະດ້ານການເງິນ ແລະ ບັນຊີຂອງວັດ ທີ່ສາມາດເປີດເຜີຍ ແລະ ກວດສອບໄດ້ ເປັນປັດໄຈສຳຄັນທີ່ຊ່ວຍຫຼຸດຜ່ອນບັນຫາຄວາມຂັດແຍ່ງ ແລະ ສ້າງຄວາມເຊື່ອໝັ້ນ ຄວາມສັດທາໃຫ້ແກ່ພຣະພິກສຸສາມະເນນ ແລະ ພຸດທະສາສະນິກະຊົນ ເຮັດໃຫ້ການດຳເນີນງານຂອງວັດບັນລຸຜົນສຳເລັດໄດ້ຢ່າງມີປະສິດທິຜົນ.

ດ້ານຫຼັກການມີສ່ວນຮ່ວມຈາກການລວມສູນອຳນາດ ສູ່ການສ້າງລະບົບນິເວດແຫ່ງຄວາມຮ່ວມມື ການບໍລິຫານວັດໃນຍຸກປັດຈຸບັນທີ່ປະເຊີນກັບຄວາມຊັບຊ້ອນທາງດ້ານສັງຄົມ ແລະ ການຮຽກຮ້ອງສິດທິໃນການຮັບຮູ້ຂໍ້ມູນຂ່າວສານ, ເຮັດໃຫ້ຮູບແບບການບໍລິຫານທີ່ລວມສູນອຳນາດຢູ່ທີ່ເຈົ້າອາວາດພຽງຝ່າຍດຽວ ເລີ່ມໝົດຄວາມທັນສະໄໝ ຜົນການວິໄຈຊີ້ໃຫ້ເຫັນວ່າ ວັດທີ່ມີປະສິດທິຜົນສູງຄືວັດທີ່ສາມາດປ່ຽນຜ່ານໄປສູ່ ການບໍລິຫານແບບມີສ່ວນຮ່ວມ ຢ່າງແທ້ຈິງ, ການມີສ່ວນຮ່ວມບໍ່ໄດ້ໝາຍເຖິງພຽງແຕ່ການລະດົມປັດໄຈທຶນຮອນ ແນວຄິດນີ້ສອດຄ່ອງກັບ ຕິຍານິນທ໌ ແສງບຸດ (2020) ທີ່ລະບຸວ່າ ການມີສ່ວນຮ່ວມຂອງທຸກພາກສ່ວນໃນອົງກອນເປັນປັດໄຈຫຼັກໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານ, ພ້ອມກັນນີ້ ພຣະຄູສັງຂະລັກ ທິຣະພັດ ອິດທິປັນໂຍ (2020) ຍັງພົບວ່າ ການເປີດພື້ນທີ່ໃຫ້ພາກສ່ວນກ່ຽວຂ້ອງເຂົ້າມາຕິດຕາມ ແລະ ກວດກາຜົນງານ ຊ່ວຍຫຼຸດຊ່ອງຫວ່າງລະຫວ່າງວັດ ແລະ ຊຸມຊົນ.

ດ້ານຫຼັກຄວາມຄຸ້ມຄ່າ ໄດ້ເຂົ້າມາມີບົດບາດສຳຄັນໃນການເປັນຕົວຂັບເຄື່ອນປະສິດທິຜົນ ໃນຍຸກທີ່ວັດຕ້ອງໄດ້ຮັບມືກັບພາລະງານທີ່ເພີ່ມຂຶ້ນ ທັງດ້ານການສຶກສາ ແລະ ສາທາລະນູປະການ, ການບໍລິຫານງົບປະມານແບບ ຕາມມີຕາມເກີດ ບໍ່ສາມາດຕອບໂຈດໄດ້ອີກຕໍ່ໄປ ຄວາມຄຸ້ມຄ່າໃນທີ່ນີ້ ບໍ່ໄດ້ໝາຍເຖິງການປະຢັດຈົນຂາດຄວາມຈຳເປັນ ແຕ່ໝາຍເຖິງ ການຈັດສັນຊັບພະຍາກອນທີ່ມີຈຳກັດ ໃຫ້ເກີດປະໂຫຍດສູງສຸດແກ່ສ່ວນລວມ ການບໍລິຫານງານທີ່ມີປະສິດທິຜົນ ຕ້ອງມີການຈັດລຳດັບຄວາມສຳຄັນຂອງໂຄງການພັດທະນາ ຜົນການວິໄຈສະທ້ອນໃຫ້ເຫັນວ່າ ຄະນະບໍລິຫານວັດທີ່ມີຄວາມເຂົ້າໃຈໃນຫຼັກຄວາມຄຸ້ມຄ່າ ຈະມີການວາງແຜນການນຳໃຊ້ຊັບພະຍາກອນຢ່າງມີຍຸດທະສາດ ເຊັ່ນ: ການບູລະນະເສນາສະນະກ່ອນທີ່ມັນຈະຊຸດໂຊມລົງ ເຊິ່ງເປັນການຮັກສາຊັບສິນວັດໃຫ້ມີອາຍຸການໃຊ້ງານຍາວນານ ເຊິ່ງສອດຄ່ອງກັບ ຊະຕິນຸດ ໄຂສີ (2023) ທີ່ເຫັນວ່າຄວາມຄຸ້ມຄ່າເກີດຈາກການວາງແຜນທີ່ແທດເໝາະກັບຄວາມຕ້ອງການຕົວຈິງຂອງຊຸມຊົນ ກະມົນວັນ ສີມ່ວງ (2017) ກໍໄດ້ເນັ້ນໜັກວ່າ ການບໍລິຫານຊັບສິນວັດໃຫ້ຍືນຍົງນັ້ນ ຕ້ອງມີລະບົບການຈັດການທີ່ໂປ່ງໃສ ຄວບຄູ່ກັບການວາງແຜນທີ່ເຮັດໃຫ້ຊັບສິນສ້າງດອກອອກຜົນ ໄດ້ ເມື່ອການເງິນຂອງວັດມີຄວາມໝັ້ນຄົງຜ່ານການຈັດການທີ່ຄຸ້ມຄ່າ.

ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບຜູ້ບໍລິຫານວັດ

ເພີ່ມທະວີຄວາມໂປ່ງໃສ (Transparency) ຈັດວາງລະບົບບັນຊີລາຍຮັບ-ລາຍຈ່າຍໃຫ້ມີມາດຕະຖານ, ເປີດເຜີຍຂໍ້ມູນງົບປະມານ ແລະ ປັດໄຈບໍລິຈາກຢ່າງຈະແຈ້ງ ຜ່ານການປະຊຸມຊຸມຊົນ ແລະ ສື່ສັງຄົມອອນລາຍ, ຍົກລະດັບຫຼັກຄວາມຮັບຜິດຊອບ (Accountability) ສ້າງກົນໄກລາຍງານຜົນງານປະຈຳປີ, ກຳນົດບົດບາດໜ້າທີ່ຂອງພຣະສົງ, ສາມະເນນ ແລະ ກຳມະການວັດໃຫ້ຊັດເຈນ ເພື່ອຫຼຸດຜ່ອນຄວາມຊ້ຳຊ້ອນ, ສົ່ງເສີມການມີສ່ວນຮ່ວມ (Participation) ເປີດໂອກາດໃຫ້ປະຊາຊົນຮ່ວມສະແດງຄວາມຄິດເຫັນ ແລະ ວາງແຜນພັດທະນາວັດຜ່ານການປະຊຸມປະຊາຄົມ ແລະ ພັດທະນາຫຼັກຄຸນນະທຳ ແລະ ນິຕິທຳ ຈັດຝຶກອົບຮົມພຣະທຳມະວິໄນ, ກົດລະບຽບສົງ ແລະ ທັກສະການບໍລິຫານຈັດການສະໄໝໃໝ່ ເພື່ອສ້າງຄວາມສັດທາ.

2. ຂໍ້ສະເໜີແນະສຳລັບອົງກອນປົກຄອງສົງ ແລະ ພາກລັດ

ກຳນົດນະໂຍບາຍ ແລະ ມາດຕະຖານ ຮ່ວມກັນວາງມາດຕະຖານການບໍລິຫານວັດ, ລະບົບບັນຊີ ແລະ ການລາຍງານຜົນງານແຫ່ງຊາດໃຫ້ເປັນເອກະພາບ, ພັດທະນາບຸກຄະລາກອນ ແລະ ງົບປະມານ ຈັດຝຶກອົບຮົມກ່ຽວກັບຫຼັກທຳມາພົບານ ແລະ ກົດໝາຍຢ່າງສະໝ່ຳສະເໝີ, ພ້ອມທັງສະໜັບສະໜູນງົບປະມານພັດທະນາໂຄງລ່າງພື້ນຖານ ແລະ ເຕັກໂນໂລຊີດິຈິຕອນ, ສ້າງກົນໄກຕິດຕາມ ແລະ ປະເມີນຜົນແຕ່ງຕັ້ງທີມງານປະເມີນຜົນການບໍລິຫານວັດປະຈຳປີ ເພື່ອປ້ອງກັນຄວາມສ່ຽງ ແລະ ສົ່ງເສີມຄວາມຮ່ວມມື: ເສີມສ້າງຄວາມຮ່ວມມືລະຫວ່າງວັດ, ຊຸມຊົນ ແລະ ອົງການລັດໃນໄລຍະຍາວ.

3. ຂໍ້ສະເໜີແນະສຳລັບຊຸມຊົນ ແລະ ອອກຕົນຍາດໂຍມ

ມີສ່ວນຮ່ວມໃນການບໍລິຫານ ແລະ ຕິດຕາມ ຮ່ວມວາງແຜນພັດທະນາວັດ, ຕິດຕາມການນຳໃຊ້ງົບປະມານ ແລະ ໃຫ້ຂໍ້ຄິດເຫັນແກ່ຄະນະບໍລິຫານວັດຢ່າງສະໜ່ຳສະເໝີ, ບຳລຸງຮັກສາ ແລະ ຮ່ວມກິດຈະກຳ ຮ່ວມແຮງຮ່ວມໃຈກັນບຳລຸງຮັກສາອາຄານສະຖານທີ່, ປູກຕົ້ນໄມ້ ແລະ ເຂົ້າຮ່ວມກິດຈະກຳທາງສາສະໜາ, ສົ່ງເສີມການສຶກສາອົບຮົມ ສົ່ງເສີມລູກຫຼານໃຫ້ເຂົ້າຮ່ວມການສຶກສາອົບຮົມສົນທຳ ແລະ ຝຶກສະມາທິ, ປະຕິບັດຕົນຕາມຄຳສອນບໍລິຈາກທານດ້ວຍຄວາມເຫຼື້ອມໃສໂດຍບໍ່ຫວັງຜົນປະໂຫຍດສ່ວນຕົວ ແລະ ປະຕິບັດຕົນຖືກຕ້ອງຕາມພຣະທຳມະວິໄນ/ກົດໝາຍ.

4. ຂໍ້ສະເໜີແນະສຳລັບການວິໄຈໃນຄັ້ງຕໍ່ໄປ

ຂະຫຍາຍຂອບເຂດ ແລະ ກຸ່ມຕົວຢ່າງ ຂະຫຍາຍພື້ນທີ່ການສຶກສາໄປທົ່ວປະເທດ (ເຊັ່ນ:ນະຄອນຫຼວງວຽງຈັນ, ຫຼວງພະບາງ, ຈຳປາສັກ, ສະຫວັນນະເຂດ) ເພື່ອປຽບທຽບເຂດເມືອງ ແລະ ຊົນນະບົດ, ຂະຫຍາຍປະເດັນການສຶກສາ ສຶກສາເພີ່ມເຕີມໃນດ້ານການບໍລິຫານຊັບສິນອັດ, ການທ່ອງທ່ຽວທາງສາສະໜາ, ການປ້ອງກັນການສໍ້ລາດບັງຫຼວງ ຫຼື ປຽບທຽບກັບສາສະໜາອື່ນ ແລະ ປ່ຽນຮູບແບບການວິໄຈ ເປັ້ນການວິໄຈເຊີງປະຕິບັດການ (Action Research) ທີ່ໃຫ້ຊຸມຊົນມີສ່ວນຮ່ວມ ແລະ ປະເມີນຜົນກະທົບຕົວຈິງ.

ເອກະສານອ້າງອີງ

ກະມົນອັນ ສີມ່ວງ. (2017). *ການບໍລິຫານງານໂດຍໃຊ້ຫຼັກທຳມາພິບານ ຂອງຜູ້ບໍລິຫານສະຖານການສຶກສາ ສັງກັດເທດສະບານນະຄອນ ສະໝຸດປຣາການ.* ງານນິພົນປະລິນຍາມະຫາບັນດິດ, ມະຫາວິທະຍາໄລບູລະພາ.

ກຸຕິຍາ ອິດສະອະເຣັດຕະກຸນ. (2024). *ການບໍລິຫານຈັດການອົງກອນຕາມຫຼັກການບໍລິຫານຈັດການບ້ານເມືອງທີ່ດີ ທີ່ສົ່ງຜົນຕໍ່ແຮງຈູງໃຈໃນການປະຕິບັດງານຂອງພະນັກງານ: ກໍລະນີສຶກສາ ອົງການບໍລິຫານສ່ວນຈັງຫວັດຊົນບຸຣີ.* ວາລະສານມະຈັດຕະກຳການສຶກສາແລະການວິໄຈ, 8(1), 100-115.

ຄະນາຈານ, ມ. (2015). ປະຫວັດພຸດທະສາສະໜາ (History of Buddhism). ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ອະຍຸດທະຍາ: ໂຮງພິມມະຫາຈຸລາລົງກອນຣາຊະວິທະຍາໄລ.

ສະຣາວຸດ ທະຕະສີໂລ, (2023). ການບໍລິຫານງານພາກລັດຕາມຫຼັກທຳມາພິບານຍຸກ 4.0. ມະຫາວິທະຍາໄລມະຫາຈຸລາລົງກອນນະຣາດຊະວິທະຍາໄລ (ມຈຣ): ວາຣະສານ: ນະວັງຄະສັດຖຸສາດປະຣິທັດ.

ສິຣິພອນ ກະວິສາຍສຸນທອນ. (2016). *ຄວາມຄິດເຫັນຂອງຄະນະກຳມະການຊຸມຊົນທີ່ມີຕໍ່ການບໍລິຫານຈັດການຂີ້ເຫຍື້ອ ມູນຝອຍຂອງເທດສະບານເມືອງຮ້ອຍເອັດ.* ຮ້ອຍເອັດ: ວິທະຍານິພົນ ມະຫາວິທະຍາໄລມະຫາມະກຸດຣາດຊະວິທະຍາໄລ.

ສິຣິພິງ ມີສຸວັນ. (2023). *ທຳມາພິບານ ແລະ ແຮງຈູງໃຈໃນການປະຕິບັດງານທີ່ສົ່ງຜົນຕໍ່ປະສິດທິຜົນການປະຕິບັດງານຂອງບຸກຄະລາກອນກົມການປົກຄອງ ຈັງຫວັດສະກົນນະຄອນ (ວິທະຍານິພົນປະລິນຍາໂທ).* ມະຫາວິທະຍາໄລຣາຊະພັດສະກົນນະຄອນ (Sakon Nakhon Rajabhat University).

ຊະຕິນຸດ ໄຂສີ. (2023). *ທຳມາພິບານກັບປະສິດທິຜົນໃນການປະຕິບັດງານຂອງບຸກຄະລາກອນ: ກໍລະນີສຶກສາ ອົງການບໍລິຫານສ່ວນຈັງຫວັດເພັດຊະບຸຣີ(ການຄົ້ນຄວ້າອິດສະຫຼະປະລິນຍາໂທ).* ຄະນະຣັດສາດ, ມະຫາວິທະຍາໄລທຳມະສາດ (Thammasat University).

ຕິຍານິນທ໌ ແສງບຸດ. (2020). *ການບໍລິຫານງານຕາມຫຼັກທຳມາພິບານຂອງອົງກອນປົກຄອງສ່ວນທ້ອງຖິ່ນ ໃນເຂດຈັງຫວັດກາຣະສິນ.* ມະຫາວິທະຍາໄລລາຊະພັດມະຫາສາຣະຄາມ.

ທຳມະນູນສົງລາວ ສະບັບປັບປຸງ 2565(2022). (2025, 12 7). ສຸນກາງ ອພສ: https://drive.google.com/file/d/1LddqOeJFlp6BWUU6yjWMtaoe_oK97Y1e/view

ນິຕິກອນ ມານະຈິດ. (2023). *ຄວາມສຳພັນລະຫວ່າງການບໍລິຫານແບບມີສ່ວນຮ່ວມຂອງຜູ້ບໍລິຫານສະຖານສຶກສາກັບ ປະສິດທິພາບການເຮັດວຽກເປັນທີມຂອງຄູໃນສະຖານສຶກສາ.* ອາເພີ່ທ່າສາງ: ມະຫາວິທະຍາໄລສຸໂຂໄທທຳມາທິລາດ.

ນູຣີຮັນ ດໍເລາະ. (2024). *ການບໍລິຫານໂດຍໃຊ້ຫຼັກທຳມາພິບານຂອງຜູ້ບໍລິຫານສະຖານການສຶກສາ ສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາຍະລະ ເຂດ 1.* ການຄົ້ນຄວ້າອິດສະລະປະລິນຍາມະຫາບັນດິດ, ມະຫາວິທະຍາໄລລາຊະພັດຍະລາ.

ປະເອດ ອະສີ. (1996). *ພຣະສົງກັບການຮູ້ເທົ່າທັນສັງຄົມໃນການບໍລິຫານວັດໃນຍຸກໂລກາພິວັດ.* ກຣຸງເທບມະຫາຄອນ: ບໍລິສັດ ເອ.ທີ. ກຣາບຟິກດີຊາຍ ແລະ ການພິມ.

ປຶ້ມສັງຄະບັນຍັດ. (2023). *ອົງການພຸດທະສາສະໜາສຳພັນລາວ ແຂວງສະຫວັນນະເຂດ.* ສະຫວັນນະເຂດ.

ພຣະຄູສັງຂະລັກທິຣະພັດ ອິດທິປັນໂຍ. (2020). *ການບໍລິຫານວັດຕາມຫຼັກທຳມາພິບານຂອງຄະນະສົງອຳເພີພິມມະບຸລີ ຈັງຫວັດສົງບຸລີ.* ສາລະນິພົນປະລິນຍາມະຫາບັນດິດ, ມະຫາວິທະຍາໄລມະຫາຈຸລາລົງກອນລາຊະວິທະຍາໄລ.

ພຣະຄູສັງຄະລັກ ທິຣະພັດ ອິດທິປັນຍາໂນ (ກອງນິມິດ). (2020). *ການບໍລິຫານວັດຕາມຫຼັກທຳມາພິບານຂອງຄະນະສົງອຳເພີພິມບຸຣີ ຈັງຫວັດສົງບຸຣີ.* ສາລະນິພົນປະລິນຍາມະຫາບັນດິດ, ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ.

ພຣະຈິຣາວິດ ຖິຕະຍາໂນ (ມະນັດທິຣະບຸດ) ແລະ ພິນິດ ແກ້ວລຳເກສດກອນ. (2025). *ປັດໄຈທີ່ສົ່ງຜົນຕໍ່ປະສິດທິຜົນການບໍລິຫານກິດຈະການຄະນະສົງ ກໍລະນີສຶກສາ: ວັດໃນເຂດພຣະນະຄອນ ກຸງເທບມະຫານະຄອນ.* ວາລະສານວິໄຈສະຖາບັນພຣະພິມົນທຳ, 12(1), 190-202.

ພຣະສຸພາບ ສຸພາໂວ (ບົວບັນຈົງ). (2018). *ບົດບາດຂອງພຣະສົງໃນການພັດທະນາຊຸມຊົນໃນເຂດພື້ນທີ່ຕຳບົນຢາງຄ້ອມ ເມືອງພິບູນ ແຂວງນະຄອນສີທຳມະຣາດ.* : ວາລະສານມະຫາຈຸລານາຄອນທັດ, 5(3) (ກັນຍາ – ທັນວາ).

ພຣະສຸຣະສັກ ຈັຕຕະພະໂຍ ກໍມາດ, ພ.ອ. (2025). *ການພັດທະນາງານປົກຄອງຄະນະສົງ ໃນເຂດອຳເພີເມືອງຂອນແກ່ນ ຈັງຫວັດຂອນແກ່ນ.* ຂອນແກ່ນ: ວານສານວິຊາການແສງອີສານ.

ພຣະທຳມະກິດຕິວິງ (ທອງດີ ສຸຣະເຕໂຊ). (1998). *ພຣະສົງກັບກິມການສາດສະໜາ ໃນ ກິມການສາດສະໜາສູ່ທິດສະວັດແຫ່ງການພັດທະນາ.* ກຣຸງເທບມະຫາຄອນ: ກິມການສາດສະໜາ.

ພຣະທຳວໍຣະນາຍົກ (ໂອພາດ ນິຣຸດຕິເມທີ). (2003). *ການພັດທະນາວັດໃຫ້ເປັນສູນກາງຂອງຊຸມຊົນ.* ກຸງເທບມະຫານະຄອນ: ໂຮງພິມມະຫາຈຸລາລົງກອນຣາຊະວິທະຍາໄລ (MCU Press).

ພຣະມະຫາສົມຍົດ ກັນລະຍານະກິດຕິ (ມານະຄົງຄາ). (2020). *ອິດທິພົນຂອງທຳມາພິບານຕໍ່ປະສິດທິຜົນການບໍລິຫານກິດຈະການຄະນະສົງແຂວງສະກົນນະຄອນ.* (ວິທະຍານິພົນ) ຂອງ ມະຫາວິທະຍາໄລຣາຄຊະພັດສະກົນນະຄອນ.

ພຣະມະຫາທະນົງໄຊ ບຸຣະນະພິສຸດ. (2002). *ບົດບາດຂອງວັດກັບຊຸມຊົນໃນເຂດບາຮັກ (ວິທະຍານິພົນ).* ມະຫາວິທະຍາໄລມະຫິດົນ.

ພຣະເທບປະຣິຍັດຕິມຸນີ (ສົມຄິດ ເຂມະຈາຣີ). (2000). *ການຄະນະສົງ ແລະ ການສາດສະໜາ.* ກຣຸງເທບມະຫາຄອນ: ມະຫາວິທະຍາໄລ ມະຫາຈຸລາລົງກອນຣາຊະວິທະຍາໄລ.

ພຣະມະຫາຈິດນະເຣດ ວຸດທິທຳໂມ ຜຊ ປອ (ຜູ່ຊ່ວຍສາດສະດາຈານ. (2010). *ການສຶກສາປະເພນີເຂົ້າພັນສາໃນສັງຄົມໄທພາກອີສານ.* ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ, ວິທະຍາເຂດອຸບົນຣາຊະທານີ.

ພົງໄຊ ນັດຖະໂສພົນ. (2023). *ຄວາມສຸກໃນການເຮັດວຽກທີ່ສົ່ງຜົນຕໍ່ປະສິດທິຜົນໃນການປະຕິບັດງານ ກໍລະນີສຶກສາ ເຈົ້າໜ້າທີ່ເທດສະບານຕຳບົນບາງລະມຸງ.* ເທດສະບານຕຳບົນບາງລະມຸງ: ມະຫາວິທະຍາໄລທຳມະສາດ ກຸງເທບມະຫານະຄອນ, ປະເທດໄທ .

ລັດສະໝີ ແສນເສນ. (2021). *ອິດທິພົນຂອງທຳມາພິບານຕໍ່ປະສິດທິຜົນການບໍລິຫານງານຕາມຍຸດທະສາດຂອງສຳນັກງານພະພຸດທະສາສະໜາຈັງຫວັດສະກົນນະຄອນ (ວິທະຍານິພົນປະລິນຍາໂທ).* ມະຫາວິທະຍາໄລຣາຊະພັດສະກົນນະຄອນ (Sakon Nakhon Rajabhat University).

ວິບຸນ ລີ້ສຸວັນ. (1996). *ສິລະປະກຳຕາມວັດ (ວັດໃນກຣຸງເທບມະຫາຄອນ).* ກຣຸງເທບມະຫາຄອນ: ບໍລິສັດຕົ້ນອໍ້ ແກຣມມີ ຈຳກັດ.

ວຸດທິສັກ ພຽນຈິດ. (2021). *ຄວາມຄິດເຫັນຂອງປະຊາຊົນຕໍ່ການບໍລິຫານງານຕາມຫຼັກທຳມາພິບານຂອງເທດສະບານຕຳບົນໝອນນາງ ອຳເພີພະບັດນິຄົມ ຈັງຫວັດຊົນບຸລີ (ວິທະຍານິພົນປະລິນຍາໂທ).* ວິທະຍາໄລການບໍລິຫານລັດຖະກິດ, ມະຫາວິທະຍາໄລບູລະພາ (Burapha University).

ວຸດທິພົງ ພິມທາດ. (2023). *ການບໍລິຫານຈັດການວັດຕາມຫຼັກທຳມາພິບານໃນເຂດປົກຄອງຄະນະສົງ ອຳເພີໂຊ່ພິໄສ ຈັງຫວັດບຶງກາຣ (ວິທະຍານິພົນປະລິນຍາໂທ).* ມະຫາວິທະຍາໄລມະຫາສາລະຄາມ (Mahasarakham University),.

ອະດຸນ ຈາຕຸຣິງຄະກຸນ. (2002). *ກົນລະຍຸດການຕະຫຼາດ.* ກຸງເທບ: ສຳນັກພິມມະຫາວິທະຍາໄລທຳມະສາດ.

ອຸເທນ ພັນທະວີ. (2023). *ປັດໃຈການບໍລິຫານທີ່ສົ່ງຜົນຕໍ່ການບໍລິຫານງານຕາມຫຼັກທຳມາພິບານຂອງໂຮງຮຽນ ສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາຕາກ ເຂດ 2.* ການຄົ້ນຄວ້າອິດສະຫຼະປະລິນຍາມະຫາບັນດິດ, ມະຫາວິທະຍາໄລນະເຣສວນ.

ເສົາວະລັດ ດີລ້ວນ, (2564). *ບົດບາດການບໍລິຫານກິດຈະການຄະນະສົງຂອງພຣະສັງຄາທິການ ໃນເຂດປົກຄອງຄະນະສົງອຳເມືອງສະຣະບຸຣີ ຈັງຫວັດສະຣະບຸຣີ.* ການຄົ້ນຄວ້າອິດສະຫຼະ, ມະຫາວິທະຍາໄລຣາຊະພັດເທບສະຕຣີ.

ເນດຣ໌ພັນນາ ຍາວິຣາດ. (2010). *ການຈັດການສະໄໝໃໝ່ (Modern Management).* ກຣຸງເທບມະຫາຄອນ, ທຣິບເພີ້ນກຣຸບ ຈຳກັດ.

ແກ້ວສັນ ອະຕິໂພທິ. (1997). *ການມີສ່ວນຮ່ວມຂອງປະຊາຊົນ: ກຸນແຈດອກສຳຄັນໃນການພັດທະນາລະບົບປະຊາທິປະໄຕ.* ກຣຸງເທບມະຫາຄອນ: ຄະນະນິຕິສາດ ມະຫາວິທະຍາໄລທຳມະສາດ.

ໂກເສກ ກຸດຕຸ້ມ. (2020). *ການບໍລິຫານຈັດການອົງກອນຕາມຫຼັກທຳມະພິບານ: ກໍລະນີສຶກສາອົງກອນປົກຄອງສ່ວນທ້ອງຖິ່ນໃນພາກຕາເວັນອອກສຽງເໜືອ.* ວິທະຍານິພົນປະລິນຍາເອກ, ມະຫາວິທະຍາໄລມະຫາມະກຸດລາຊະວິທະຍາໄລ.

ໄພສານ ສຸຣິຍະມົງຄົນ. (2008). *ຍຸດທະສາດການພັດທະນາທີ່ຍືນຍົງ ໃນ ກົນລະຍຸດການວາງແຜນພັດທະນາພື້ນທີ່ທ້ອງຖິ່ນແບບບູຣະນາການ.* ກຣຸງເທບມະຫາຄອນ: ບໍລິສັດ ເອັກສ໌ເປີຣ໌ເນັດ ຈຳກັດ.

Chagnon, P. D. A., Rumpf, H., Van Gansberghe, D., & Binh, N. (2003). *Governance and participation in Laos.* Sida (Swedish International Development Cooperation Agency).

Darren George, a. P. (2010). SPSS for Windows Step by Step: A Simple Guide and Reference, 17.0. Boston: Allyn & Bacon (Pearson).

Edwin, B. (1966). Management: A Behavior Approach. : . Boston: Allyn and Bacon.

Hair et al. (2019). *Multivariate Data Analysis, 8th ed.* Cengage.

Hair et al. (2019). Multivariate Data Analysis, 8th ed. Cengage.

Hughes, E. (1994). Public Management and Administration: An Introduction. London: The Mcmillan Press.

Jeffrey M. Wooldridge. (2010). *Econometric Analysis of Cross Section and Panel Data.* MIT Press, Cambridge, Massachusetts.

Jum C. Nunnally and Ira H. Bernstein. (1994). *Psychometric Theory.* New York: McGraw-Hill.

MO Akinwande, H. D. (2015). Variance Inflation Factor: As a Condition for the Inclusion of Suppressor Variable in Predictor Model. Open Journal of Statistics, Vol. 5, No. 7.

Mukhtar Balarabe, K. A. (2015). Long-Term Trend and Seasonal Variability of Horizontal Visibility in Nigerian Troposphere. อาละสาม Atmosphere (Atmosphere 2015, 6, 1462-1486; doi: 10.3390/atmos6101462).

Rex B. Kline. (2011). *Principles and Practice of Structural Equation Modeling.* New York: Guilford Press.

Simon, A. (1971). Public Administration. New York: Alfred A. Knopf.

Trevor S. Breusch and Adrian R. Pagan. (1979). A Simple Test for Heteroscedasticity and Random Coefficient Variation. Econometrica, Vol. 47, No. 5.